ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລາມລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-07 ສິງຫາ 2024
ປີທີ 13
ສະບັບທີ 980
ລາຍສັບປະດາ

## ສພຊ ເຊື່ອມຊຶມມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ແລະ ປະກາດແຕ່ງຕັ້ງຕຳແໜ່ງຈຳນວນໜຶ່ງ



(ສພຊ) - ກອງປະຊຸມເຜີຍແຜ່ເຊື່ອມຊຶມມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກຄັ້ງທີ 8 ສະໄໝທີ XI ໃຫ້ແກ່ສະມາຊິກພັກພາຍໃນສະພາແຫ່ງຊາດ (ສພຊ) ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 18 ກໍລະກົດ 2024 ໂດຍການເປັນປະທານ ແລະ ເຜີຍແຜ່ຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ມີບັນດາສະຫາຍຄະນະປະຈຳພັກ, ຄະນະບໍລິຫານງານພັກ, ເລຂາ ແລະ ຮອງເລຂາບັນດາຮາກຖານພັກ ພ້ອມດ້ວຍສະມາຊິກພັກທົ່ວ ສພຊ ເຂົ້າ

ອ່ານຕໍ່ໜ້າ 6

## ຮອງປະທານສະພາແຫ່ງຊາດ ວາງພວງມາລາ ແລະ ຂຽນປຶ້ມໄວ້ອາໄລອະດີດເລຂາທິການໃຫຍ່ພັກກອມມູນິດຫວຽດນາມ



ອ່ານຕໍ່ໜ້າ 6

## ຮຽບຮຽງເນື້ອໃນກົດໝາຍສະຫະກອນ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນກົດໝາຍວ່າດ້ວຍສະຫະກອນ (ສະບັບສ້າງໃໝ່) ໄດ້ຈັດຂຶ້ນໃນວັນທີ 19-20 ກໍລະກົດ 2024 ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ (ສພຊ), ມີບັນດາທ່ານປະທານແລະຮອງປະທານກຳມາທິການພາຍໃນ ສພຊ,

ອ່ານຕໍ່ໜ້າ 12

## ປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນຢູ່ນະຄອນຫຼວງ

(ສພຊ) - ເພື່ອສະຫຼຸບຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນໃນໄລຍະ 9 ປີຜ່ານມາໃນຂອບເຂດທົ່ວປະເທດ ກໍຄືນະຄອນຫຼວງວຽງຈັນ ໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ບົດບັນຍັດທີ່ສອດຄ່ອງ ຫຼື ບໍ່ສອດຄ່ອງ, ບົດຮຽນ ແລະ ບັນຫາທີ່ຕັ້ງຂຶ້ນ ເພື່ອເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າ, ປັບປຸງເນື້ອໃນຂອງລັດຖະທຳມະນູນ ສະບັບປີ 2015 ໃຫ້ຖືກຕ້ອງ, ຄົບຖ້ວນ,



ສອດຄ່ອງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ. ວັນທີ 17 ກໍລະກົດນີ້ ທີ່ຫ້ອງປະຊຸມຫ້ອງວ່າການນະຄອນຫຼວງວຽງຈັນ (ນວ) ໄດ້ມີກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015

ອ່ານຕໍ່ໜ້າ 7

## ຄົ້ນຄວ້າປັບປຸງໂຄງປະກອບກົງຈັກການຈັດຕັ້ງຂອງ ສພຊ ແລະ ສພຂ



(ສພຊ) - ກອງປະຊຸມຄົ້ນຄວ້າປັບປຸງໂຄງປະກອບກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໄດ້ຈັດຂຶ້ນລະຫວ່າງວັນທີ 18-19 ກໍລະກົດ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ສສຊ), ປະທານສະພາປະຊາຊົນແຂວງວຽງຈັນ, ຮອງເລຂາທິການສະພາແຫ່ງຊາດ, ຮອງເລຂາທິການສະພາປະຊາຊົນແຂວງວຽງຈັນພ້ອມດ້ວຍຕາງໜ້າຈາກຄະນະຈັດຕັ້ງສູນກາງພັກ, ກະຊວງພາຍໃນ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ.

ທ່ານ ຄຳໃບ ດຳລັດ ມີຄຳເຫັນວ່າ: ສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ໄດ້ພ້ອມກັນຈັດຕັ້ງແລະເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍການຍົກສູງຄວາມຮັບຜິດຊອບ ແລະ ມີຜົນສຳເລັດຕາມແຜນການທີ່ວາງໄວ້; ໃນດ້ານການເຄື່ອນໄຫວ ຖືວ່າສະພາຊຸດນີ້ໄດ້ດຳເນີນມາຮອດໄລຍະເກືອບທ້າຍສະໄໝແລ້ວ. ເພື່ອຕີລາຄາຄືນສະພາບການປັບປຸງ

ອ່ານຕໍ່ໜ້າ 7

## ປະເມີນຜົນການປະຕິບັດລັດຖະທຳມະນູນຢູ່ຄຳມ່ວນ

(ສພຊ) - ເພື່ອສະຫຼຸບຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນໃນໄລຍະ 9 ປີຜ່ານມາໃນຂອບເຂດທົ່ວປະເທດ ກໍຄືແຂວງຄຳມ່ວນ ໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ບົດບັນຍັດທີ່ສອດຄ່ອງ ຫຼື ບໍ່ສອດຄ່ອງ, ບົດຮຽນ ແລະ ບັນຫາທີ່ຕັ້ງຂຶ້ນ ທັງເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າ, ປັບປຸງເນື້ອໃນຂອງລັດຖະທຳມະນູນໃຫ້ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງໄດ້. ກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ຢູ່ແຂວງຄຳມ່ວນ ຈຶ່ງໄດ້ຈັດຂຶ້ນໃນວັນທີ 23 ກໍລະກົດນີ້ ທີ່ສະໂມສອນ 21 ມີນາ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີເຈົ້າແຂວງ, ປະທານສະພາປະຊາຊົນແຂວງ, ຄະນະຮັບຜິດຊອບປັບປຸງລັດຖະທຳ

ອ່ານຕໍ່ໜ້າ 6

## ໄຊຍະບູລີ ປະເມີນຜົນການປະຕິບັດລັດຖະທຳມະນູນ




(ສພຊ) - ກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ຢູ່ແຂວງໄຊຍະບູລີ ໄດ້ຈັດຂຶ້ນໃນວັນທີ 23 ກໍລະກົດ 2024 ທີ່ຫ້ອງປະຊຸມໃຫຍ່ຂອງແຂວງ ໂດຍການເປັນປະທານຂອງທ່ານ ພິທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີບັນດາການນຳຂັ້ນສູງ ແລະ ພະນັກງານຫຼັກແຫຼ່ງຂອງອົງການຈັດຕັ້ງພັກ-ລັດຂັ້ນແຂວງ, ເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ພ້ອມດ້ວຍພະນັກງານການນຳຂັ້ນນຳພາ-ຄຸ້ມຄອງ ເຂົ້າຮ່ວມຫຼາຍກວ່າ 130 ທ່ານ.

ຈຸດປະສົງກໍເພື່ອຕີລາຄາການໂຄສະນາເຜີຍແຜ່ ແລະ ເຊື່ອມຊຶມລັດຖະທຳມະນູນຕິດພັນກັບການສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ

ອ່ານຕໍ່ໜ້າ 7

# ສພຊ ປິດຊຸດເຝິກອົບຮົມວຽກງານກວດກາພັກ-ລັດ



(ສພຊ)-ຕອນບ່າຍວັນພະຫັດທີ 18 ກໍລະກົດຜ່ານມາ, ຄະນະກວດກາພັກ-ລັດສະພາແຫ່ງຊາດ (ສພຊ) ໄດ້ຈັດພິທີປິດຊຸດເຝິກອົບຮົມວຽກງານກວດກາ ໃຫ້ແກ່ພະນັກງານຜູ້ເຮັດວຽກກວດກາ ຂອງບັນດາຮາກຖານພັກ, ໜ່ວຍພັກ ແລະ ອົງການຈັດຕັ້ງມະຫາຊົນພາຍໃນ ສພຊ ພາຍຫຼັງທີ່ດຳເນີນການເຝິກອົບຮົມມາເປັນເວລາ 10 ວັນ (5-18 ກໍລະກົດ 2024) ໂດຍການເປັນປະທານພິທີປິດຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ມີສະຫາຍ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ຄະນະບໍລິຫານງານພັກສະພາແຫ່ງຊາດ, ສະຫາຍ ປອ. ດາວບົວລະພາ ບາວົງເພັດ ຮອງປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ພ້ອມດ້ວຍບັນດາສະຫາຍໃນຄະນະບໍລິຫານງານພັກ, ຄະນະພັກຮາກຖານຄະນະເລຂາທິການ, ຄະນະໜ່ວຍພັກຮາກຖານ, ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ຕາງໜ້າ 3 ອົງການຈັດຕັ້ງມະຫາຊົນພາຍໃນ ສພຊ, ບັນດາສະຫາຍຜູ້ເຂົ້າຮ່ວມເຝິກອົບຮົມ ແລະ ພະນັກງານຈາກກົມທີ່ກ່ຽວຂ້ອງຂອງຄະນະກວດກາສູນກາງພັກເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ສະຫາຍ ນາງ ຫວັນໄຊ ຈັນທະລາ ຫົວໜ້າກົມກວດກາ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຜ່ານບົດສະຫຼຸບການເຝິກອົບຮົມວຽກງານກວດກາໃນໄລຍະ 10 ວັນ ແລະ ຜ່ານຂໍ້ຕົກລົງຂອງຄະນະກວດກາສູນກາງພັກ ວ່າດ້ວຍການອະນຸມັດອອກໃບຢັ້ງຢືນໃຫ້ນັກເຝິກອົບຮົມທີ່ເຂົ້າຮ່ວມເຝິກອົບຮົມວຽກງານກວດກາພັກ-ລັດ ຢູ່ສະພາແຫ່ງຊາດ ສະບັບເລກທີ 328/ຄກສພ, ລົງວັນທີ 18 ກໍລະກົດ 2024.

ໃນກອງປະຊຸມ, ສະຫາຍຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມໂດຍໄດ້ຕີລາຄາຊົມເຊີຍຜົນສຳເລັດໃນຕະຫຼອດໄລຍະການເຝິກອົບຮົມ, ນັກເຝິກອົບຮົມແລະພະນັກງານ-ລັດຖະກອນພາຍໃນກົມກວດກາ ໄດ້ແລກປ່ຽນບົດຮຽນນຳວິທະຍາກອນທີ່ມາຈາກຄະນະກວດກາສູນກາງພັກ ໃນ 15 ຫົວບົດສະເພາະ ໃນການເພີ່ມຄວາມຮູ້ພື້ນຖານວຽກງານກວດກາພັກ, ກວດກາລັດ, ການສ້າງແຜນການດຳເນີນການກວດກາ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ວຽກງານຕິດຕາມກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ, ການຄົ້ນຄວ້າແກ້ໄຂຄຳຮ້ອງຟ້ອງ, ຄຳຮ້ອງຂໍຄວາມເປັນທຳ, ຄຳສະເໜີ ແລະ ການແກ້ໄຂຜົນການກວດກາ ລວມທັງການຕິດຕາມການຈັດຕັ້ງປະຕິບັດຜົນການກວດກາແຕ່ລະໄລຍະ ໂດຍໄດ້ຍົກຕົວຢ່າງທຽບໃສ່ພຶດຕິກຳຕົວຈິງ ແລະ ແລກປ່ຽນບົດຮຽນຈາກການເຮັດວຽກງານກວດກາຕົວຈິງຂອງບັນດາວິທະຍາກອນ, ອັນເປັນການປະກອບສ່ວນເພີ່ມຄວາມຮູ້, ຄວາມເຂົ້າໃຈ ແລະ ສ້າງຄວາມເຂັ້ມແຂງໃຫ້ຜູ້ເຮັດວຽກກວດກາພາຍໃນສະພາແຫ່ງຊາດຂຶ້ນຕື່ມອີກລະດັບໜຶ່ງ.

ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມອບໃບຢັ້ງຢືນໃຫ້ແກ່ນັກເຝິກອົບຮົມທັງ 33 ສະຫາຍ ແລະ ສະແດງຄວາມຊົມເຊີຍຕໍ່ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ, ຄະນະກວດກາພັກ-ລັດສະພາແຫ່ງຊາດ ເວົ້າລວມ, ເວົ້າສະເພາະ ຄະນະຮັບຜິດຊອບ, ກອງເລຂາ, ສາມອົງການຈັດຕັ້ງມະຫາຊົນພາຍໃນສະພາແຫ່ງຊາດທີ່ມີຄວາມຮັບຜິດຊອບສູງໃນການດຳເນີນຊຸດເຝິກອົບຮົມຄັ້ງນີ້ ໄດ້ຮັບຜົນສຳເລັດເປັນຢ່າງດີ.

**(ນາງ ອາລິນ ສຸພົມມະປະດິດ)**

# ຍົກລະດັບການເປັນວິທະຍາກອນ ໃຫ້ແກ່ບັນດາການຈັດຕັ້ງຂອງ ສພຊ



(ສພຊ) - ກອງປະຊຸມເຝິກອົບຮົມການເປັນວິທະຍາກອນໃຫ້ແກ່ບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ (ສພຊ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 16-17 ກໍລະກົດ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານປະທານ ແລະ ຮອງປະທານກຳມາທິການ, ຮອງເລຂາທິການ ແລະ ຄະນະສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ທັງນີ້ກໍເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານຂອງຄະນະປະຈຳສະພາແຫ່ງຊາດ ໄລຍະ 5 ປີ 2021-2025 ໂດຍສະເພາະການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ພະນັກງານທີ່ເປັນເສນາທິການ ໃຫ້ມີປະສິດທິຜົນແນໃສ່ຍົກສູງການປະຕິບັດພາລະບົດ ບາດ, ສິດ ແລະ ໜ້າທີ່ຂອງບັນດາກຳມາທິການ, ຄະນະເລຂາທິການ, ສະຖາບັນຄົ້ນຄວ້ານິຕິກຳແລະສະພາປະຊາຊົນຂັ້ນແຂວງ (ສພຂ) ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ແລະ ແຜນການເຄື່ອນໄຫວຂອງແຕ່ລະພາກສ່ວນ; ເພື່ອພັດທະນາວິທະຍາກອນຂອງ ສພຊ ແລະ ສພຂ ໃຫ້ມີຄວາມເປັນເອກະພາບ, ລວມສູນ ແລະ ລົງເລິກສະເພາະດ້ານ ທັງຮັບປະກັນດ້ານເນື້ອໃນຫົວຂໍ້, ຫຼັກສູດ, ຄູ່ມືການສອນ ຢ່າງມີຈຸດສຸມ, ຍົກສູງປະສິດທິພາບ ແລະ ປະສິດ ທິຜົນໃນການສະເໜີອະທິບາຍເນື້ອໃນບົດຮຽນແລະການຄົ້ນຄວ້າເອກະສານ ໃຫ້ ສສຊ, ສສຂ ດີຂຶ້ນກວ່າເກົ່າ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນກ່າວເປີດວ່າ: ຈຸດປະສົງຕົ້ນຕໍຂອງກອງປະຊຸມຄັ້ງນີ້ເພື່ອບຳລຸງຍົກລະດັບການເປັນວິທະຍາກອນໃຫ້ແກ່ພະນັກງານນຳພາ-ຄຸ້ມຄອງຂັ້ນສູງຂອງສະພາແຫ່ງຊາດ; ໃນໄລຍະທີ່ຜ່ານມາບັນດາທ່ານກໍລ້ວນແຕ່ໄດ້ຮ່ຳຮຽນ, ເຝິກອົບຮົມແລະເຄີຍປະຕິບັດພາລະບົດບາດເປັນວິທະຍາກອນມາແລ້ວ, ແຕ່ການເຝິກອົບຮົມເທື່ອນີ້ ກໍເພື່ອຖ່າຍທອດໃຫ້ແກ່ພະນັກງານຂັ້ນລຸ່ມ ແລະ ຜູ້ສືບທອດເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການເປັນວິທະຍາກອນໃນວຽກງານສຳຄັນຕ່າງໆຂອງສະພາແຫ່ງຊາດໃນປັດຈຸບັນ ແລະ ຕໍ່ໜ້າ.

ຜູ້ເຂົ້າຮ່ວມເຝິກອົບຮົມໄດ້ຮັບຟັງ ແລະ ແລກປ່ຽນຄວາມເຫັນຕໍ່ເນື້ອໃນສຳຄັນຄື: ບົດບາດ ແລະ ຫຼັກການເວົ້າຂອງວິທະຍາກອນ ສະເໜີໂດຍທ່ານ ນາງ ບຸນເພັງ ມູນໂພໄຊ ອະດີດລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ການສ້າງຄວາມເຊື່ອໝັ້ນສຳລັບວິທະຍາກອນແລະປາຖະກະຖາ ສະເໜີໂດຍທ່ານ ສີພຸກ ວົງພັກດີ ອະດີດຮອງລັດຖະມົນຕີກະຊວງພາຍໃນ, ຄວາມຮູ້ພື້ນຖານການເປັນວິທະຍາກອນຂອງສະພາແຫ່ງຊາດ ສະເໜີໂດຍທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ.

ການເຝິກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິອາຊີ (The Asia Foundation) ໂດຍຜ່ານກອງເລຂຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ແລະ ທຶນສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ກຸກກິກ ບຸດດາໄຊ)**

# ຮຽບຮຽງເນື້ອໃນກົດໝາຍການທ່ອງທ່ຽວ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນວັນທີ 17-18 ກໍລະກົດ 2024 ທີ່ທ່າລາດ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີບັນດາທ່ານປະທານ ແລະ ຮອງປະທານກຳມາທິການສະພາແຫ່ງຊາດ (ສພຊ), ທ່ານຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ທ່ານຮອງລັດຖະມົນຕີກະຊວງຍຸຕິທຳ, ທ່ານຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ຄຳແພງ ວິລະພັນ ໄດ້ມີຄຳເຫັນວ່າ: ກອງປະຊຸມຄັ້ງນີ້ ຈະໄດ້ພ້ອມກັນຄົ້ນຄວ້າ ແລະ ຮຽບຮຽງເນື້ອໃນຂອງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ) ຕາມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໃນຕອນເຊົ້າວັນທີ 27 ມິຖຸນາ 2024 ຈຳນວນ 19 ທ່ານ ຕໍ່ 32 ມາດຕາ ກວມເອົາ 52 ເນື້ອໃນ, ຄະນະຮັບຜິດຊອບປັບປຸງກົດໝາຍກໍໄດ້ຄົ້ນຄວ້າພິຈາລະນາປັບປຸງເບື້ອງຕົ້ນ ເຊິ່ງທ່ານຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກໍໄດ້ລາຍງານຜົນການປັບປຸງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ໃນຕອນເຊົ້າວັນທີ 01 ກໍລະກົດ 2024 ຈາກນັ້ນ, ສສຊ ກໍໄດ້ຮັບຮອງເອົາກົດໝາຍສະບັບນີ້ດ້ວຍຄະແນນສຽງເຫັນດີ 140 ທ່ານ ເທົ່າກັບ 95.23%; ແຕ່ເຖິງຢ່າງໃດກໍຕາມ, ມີບັນດາ ສສຊ ໄດ້ປະກອບ ຄຳເຫັນຢ່າງຫຼວງຫຼາຍ ແລະ ກົງໄປກົງມາຕໍ່ເນື້ອໃນຕ່າງໆຂອງຮ່າງກົດໝາຍສະບັບນີ້. ສະນັ້ນ, ພວກເຮົາຈະໄດ້ສຸມໃສ່ຄົ້ນຄວ້າຢ່າງເລິກເຊິ່ງເພື່ອເລືອກເຟັ້ນເອົາຄຳເຫັນຂອງຜູ້ແທນມາພິຈາລະນາປັບປຸງໃສ່ເນື້ອໃນກົດໝາຍ ແລະ ເນື່ອງຈາກເປັນການຮຽບຮຽງຄັ້ງສຸດທ້າຍ, ຖ້າເຫັນວ່າຍັງມີຈຸດໃດ, ຄຳສັບຄຳເວົ້າໃດທີ່ບໍ່ທັນຈະແຈ້ງ ແລະ ສອດຄ່ອງ ກໍສາມາດຍົກຂຶ້ນຕື່ມ ເພື່ອເຮັດໃຫ້ກົດໝາຍມີເນື້ອໃນຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສົມບູນກ່ອນປະທານສະພາແຫ່ງຊາດຈະລົງລາຍເຊັນ.

ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ເນື້ອໃນກົດໝາຍສະບັບນີ້ ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ; ຮັບປະກັນໃຫ້ບັນດາຄຳຄິດຄຳເຫັນຂອງ ສສຊ ທີ່ໄດ້ປະກອບໃສ່ກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ) ທີ່ຜ່ານການພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ໄດ້ຮັບການຄົ້ນຄວ້າເລືອກເຟັ້ນປັບປຸງໃສ່ຮ່າງກົດໝາຍດັ່ງກ່າວໃຫ້ມີຄວາມຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ, ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງຍາວນານ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິອາຊີ (The Asia Foundation) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ຕາດຳ ທ່ານຟ້າ)**

# ປະທານ ກສຕສ ຕ້ອນຮັບທູດ ສ.ເກົາຫຼີ ປະຈຳ ສປປລາວ



(ສພຊ) - ວັນທີ 23 ກໍລະກົດຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ (ກສຕສ) ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ຈອງ ຢອງ ຊູ (Jung Yung Soo) ເອກອັກຄະລັດຖະທູດແຫ່ງສາທາລະນະລັດເກົາຫຼີ ປະຈຳ ສປປ ລາວ.

ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ສະແດງຄວາມຍິນດີຕ້ອນຮັບ ພ້ອມທັງຕີລາຄາສູງຕໍ່ການພົບປະຄັ້ງນີ້ເປັນໂອກາດດີໃນການປຶກສາຫາລືກັນກ່ຽວກັບການພົວພັນຮ່ວມມືກັບສະພາແຫ່ງຊາດກໍຄືສ.ເກົາຫຼີ ໂດຍສະເພາະແມ່ນຂົງເຂດເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ ເຊິ່ງ ສ.ເກົາຫຼີ ມີບົດຮຽນລ້ຳຄ່າຫຼາຍທີ່ສາມາດບົກແບ່ງ ໃຫ້ແກ່ສະພາແຫ່ງຊາດລາວ ກໍຄືກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ທັງໃນຮູບແບບການພົບປະ, ແລກປ່ຽນຂໍ້ມູນຂ່າວສານ, ເຝິກອົບຮົມ-ທັດສະນະສຶກສາ ແລະ ອື່ນໆ. ທ່ານປະທານກສຕສຍັງແຈ້ງໃຫ້ຊາບການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບ ສະພາແຫ່ງຊາດສ.ເກົາຫຼີທີ່ມີການພົວພັນ ແລະ ຮ່ວມ ມືນຳກັນເປັນຢ່າງດີ ແລະ ຕໍ່ເນື່ອງໃນຫຼາຍລະດັບ ເຊິ່ງໃນໄລຍະປີ 2019 ມານີ້, ສອງຝ່າຍມີການພົບປະທາງໄກລະຫວ່າງ 2 ປະທານສະພາແຫ່ງຊາດ, 2ຄະນະມິດຕະພາບ, ບັນດາກຳມາທິການແລະຄະນະມິດຕະພາບລັດຖະສະພາຂອງສະພາແຫ່ງຊາດ ລາວ-ສ.ເກົາຫຼີ ກໍແລກປ່ຽນຢ້ຽມຢາມ ເຊິ່ງກັນແລະກັນ, ພິເສດໃນເດືອນມິຖຸນາ2023ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ຜູ້ເກົ່າ) ໃນນາມປະທານຄະນະມິດຕະພາບ ລັດຖະສະພາ ລາວ-ເກົາຫຼີ ກໍໄດ້ໄປຢ້ຽມຢາມ ແລະ ເຮັດວຽກ ຢູ່ ສ.ເກົາຫຼີ; ນອກນີ້, ສອງສະພາແຫ່ງຊາດ ກໍມີການຮ່ວມມືສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນແລະສາກົນ.

ທ່ານ ຈອງ ຢອງ ຊູ ໄດ້ສະແດງຄວາມຂອບໃຈຕໍ່ນາງ ປິ່ງຄຳ ລາຊະສິມມາ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ໃຫ້ຄຳໝັ້ນສັນຍາວ່າ ຈະພະຍາຍາມຢ່າງສຸດຄວາມສາມາດ ເພື່ອຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບແລະການຮ່ວມມືອັນດີງາມລະຫວ່າງສ.ເກົາຫຼີ-ສປປ ລາວ ກໍຄືການຊຸກຍູ້ການພົວພັນຮ່ວມມືຂອງສອງອົງການນິຕິບັນຍັດ ເວົ້າລວມ, ເວົ້າສະເພາະແມ່ນວຽກງານຂົງເຂດເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມໃຫ້ໄດ້ຮັບການພັດທະນາແລະຂະຫຍາຍຕົວຍິ່ງໆຂຶ້ນ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ຮຽບຮຽງເນື້ອໃນກົດໝາຍຊັບພະຍາກອນທີ່ເປັນຢາ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສະບັບສ້າງໃໝ່) ໄດ້ຈັດຂຶ້ນໃນວັນທີ 22-23 ກໍລະກົດນີ້ ທີ່ທ່າລາດ ແຂວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ, ທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ແລະ ທ່ານ ດຣ. ບຸນແຝງ ພູມມະໄລສິດ ລັດຖະມົນຕີກະຊວງສາທາລະນະສຸກ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຕາງໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທ່ານບຸນຕາເທບພະວົງ ໄດ້ມີຄຳເຫັນກ່າວເປີດໂດຍໄດ້ເນັ້ນໜັກວ່າ: ພວກເຮົາຈະໄດ້ພ້ອມກັນຄົ້ນຄວ້າ ແລະ ຮຽບຮຽງເນື້ອໃນຂອງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາຕາມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ຄັ້ງວັນທີ 20 ມິຖຸນາ 2024 ຈຳນວນ 36 ທ່ານ ກວມເອົາ 51 ມາດຕາ ເຊິ່ງຄະນະຮັບຜິດຊອບຮ່າງກົດໝາຍດັ່ງກ່າວ ໄດ້ຄົ້ນຄວ້າພິຈາລະນາປັບປຸງສຳເລັດໂດຍພື້ນຖານແລ້ວ ໃນນີ້ປັບປຸງ 22 ມາດຕາ, ຮັກສາໄວ້ຄືເກົ່າ 29 ມາດຕາ ແລະໃນວັນທີ28ມິຖຸນາ2024 ກອງປະຊຸມສະໄໝສາມັນເທື່ອທີ 7 ໄດ້ພິຈາລະນາຮັບຮອງເອົາດ້ວຍຄະແນນສຽງເຫັນດີ 97.16% ແລະ ກອງປະຊຸມຄັ້ງນີ້ ຈະຄົ້ນຄວ້າຄືນບັນດາຄຳເຫັນຂອງ ສສຊ ເພື່ອເລືອກເຟັ້ນປັບປຸງໃສ່ ແນໃສ່ເຮັດໃຫ້ເນື້ອໃນຂອງກົດໝາຍມີຄວາມຄົບຖ້ວນ, ສົມບູນ ແລະ ສາມາດຈັດຕັ້ງປະຕິບັດໄດ້.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິອາຊີ (The Asia Foundation) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

# ປະທານ ກຕທ ຮັບການເຂົ້າຢ້ຽມຂໍ່ານັບຂອງ ບັນດາທູດລາວທີ່ຈະໄປປະຈຳການຢູ່ຕ່າງປະເທດ



(ສພຊ) - ວັນທີ 15 ກໍລະກົດ 2024 ທີ່ຫ້ອງຮັບແຂກສະພາແຫ່ງຊາດ (ສພຊ), ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ (ກຕທ) ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງບັນດາທ່ານທູດ ໃນນາມຕົວແທນຂອງ ສປປ ລາວ ທີ່ຖືກແຕ່ງຕັ້ງໄປປະຈຳການຢູ່ຕ່າງປະເທດ ນຳໂດຍທ່ານ ສີພັນດອນ ອ້ອຍບົວບຸດດີ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປປ ລາວ ປະຈຳລັດເຊຍ, ທ່ານ ບຸນທະວີ ວິລະວົງ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປ ລາວ ປະຈຳຊູແອດ, ທ່ານ ຫົງແກ້ວ ສຸກສະຫວັດ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປ ລາວ ປະຈຳມົງໂກລີ ແລະ ທ່ານ ເທບຖາວອນ ແສງມະນີ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປ ລາວ ປະຈຳມາເລເຊຍ.

ທ່ານ ສັນຍາ ປຣະເສີດ ສະແດງຄວາມຊົມເຊີຍເປັນຢ່າງສູງຕໍ່ບັນດາທ່ານເອກອັກຄະລັດຖະທູດ ໃນນາມຕົວແທນຂອງ ສປປ ລາວ ທີ່ຖືກແຕ່ງຕັ້ງໄປປະຈຳການຢູ່ລັດເຊຍ, ຊູແອດ, ມົງໂກລີ ແລະ ມາເລເຊຍ ທັງສະແດງຄວາມເຊື່ອໝັ້ນວ່າ ດ້ວຍບົດຮຽນ ແລະ ປະສົບການທາງດ້ານການທູດຂອງບັນດາທ່ານຈະເຮັດໃຫ້ການປະຕິບັດໜ້າທີ່ທາງການທູດ ກໍຄືການເປັນຂົວຕໍ່ອັນສຳຄັນໃນການຊຸກຍູ້ ແລະ ສົ່ງເສີມສາຍພົວພັນມິດຕະພາບ ແລະການຮ່ວມມືອັນດີງາມ ລະຫວ່າງ ສປປລາວ ກັບ ຕ່າງປະເທດ ເວົ້າລວມ, ເວົ້າສະເພາະລະຫວ່າງອົງການນິຕິບັນຍັດ ຂອງ ສປປ ລາວ ກັບ ຕ່າງປະເທດ ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ; ພ້ອມນັ້ນ, ກໍໃຫ້ຂໍ້ມູນກ່ຽວກັບການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວກັບລັດຖະສະພາຂອງລັດເຊຍ, ຊູແອດ, ມົງໂກລີ ແລະ ມາເລເຊຍ.

ທ່ານປະທານ ກຕທ ຍັງໄດ້ແຈ້ງໃຫ້ຊາບທິດທາງແຜນການການພົວພັນຮ່ວມມືໃນຕໍ່ໜ້າລະຫວ່າງສະພາແຫ່ງຊາດລາວ ກັບລັດຖະສະພາຕ່າງປະເທດ ເຊິ່ງຈະສືບຕໍ່ຄົ້ນຄວ້າ ແລະ ເຊັນບົດບັນທຶກວ່າດ້ວຍການຮ່ວມມື ໂດຍສະເພາະແມ່ນກັບລັດຖະສະພາປະເທດເພື່ອນມິດຍຸດທະສາດ ເພື່ອຊຸກຍູ້ສົ່ງເສີມ ແລະ ເປີດກວ້າງການພົວພັນຮ່ວມມືບົນພື້ນຖານແນວທາງການຕ່າງປະເທດຂອງພັກ-ລັດເຮົາ; ແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆຂອງ ສພຊ, ຄະນະມິດຕະພາບລັດຖະສະພາລາວ ກັບ ຕ່າງປະເທດ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ກັບ ລັດຖະສະພາຕ່າງປະເທດ ເພື່ອຢ້ຽມຢາມ, ເຮັດວຽກ ແລະ ຖອດຖອນບົດຮຽນເຊິ່ງກັນແລະກັນ; ເຂົ້າຮ່ວມເຄື່ອນໄຫວແລະປະຕິບັດພັນທະຕໍ່ບັນດາອົງການຈັດຕັ້ງພາກພື້ນ ແລະ ສາກົນ ທີ່ສະພາແຫ່ງຊາດລາວເປັນພາຄີ ເປັນຕົ້ນແມ່ນ IPU, ASEP,APF,APPF ແລະອື່ນໆ; ເພີ່ມທະວີການຕິດຕາມກວດກາ ແລະ ຊຸກຍູ້ການປະຕິບັດສົນທິສັນຍາ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ; ສືບຕໍ່ແລກປ່ຽນສານອວຍພອນ, ສານຊົມເຊີຍ, ສານຕອບຂອບໃຈ, ສານເສົ້າສະຫຼົດໃຈແລະອື່ນໆກັບບັນດາລັດຖະສະພາຕ່າງປະເທດ; ຕ້ອນຮັບການເຂົ້າພົບປະເຮັດວຽກ ແລະ ຢ້ຽມຂໍ່ານັບຂອງບັນດາທູຕານຸທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳລາວ ແລະ ແຂກຕ່າງປະເທດທີ່ມາຢ້ຽມຢາມສປປລາວ.

ໂອກາດດຽວກັນ, ທ່ານ ສັນຍາ ປຣະເສີດ ຍັງໄດ້ສະເໜີບັນດາທ່ານເອກອັກຄະລັດຖະທູດ ສືບຕໍ່ຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ການລົງທຶນລະຫວ່າງ ສປປ ລາວ ກັບ ຕ່າງປະເທດ ໃຫ້ຂະຫຍາຍຕົວຂຶ້ນກວ່າເກົ່າ; ຊ່ວຍຊຸກຍູ້ການພົວພັນຮ່ວມມືລະຫວ່າງອົງການນິຕິບັນຍັດໃຫ້ເປັນປົກກະຕິແລະຕໍ່ເນື່ອງ ໂດຍມີການແລກປ່ຽນຄະນະຜູ້ແທນນຳກັນໃນລະດັບຕ່າງໆຢ່າງປົກກະຕິ; ຊຸກຍູ້ການຮ່ວມມືທາງດ້ານວິຊາການ ໂດຍຮູບການຈັດສຳມະນາ, ເຝິກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນ ເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ສພຊ ແລະສພຂ ຂອງສປປລາວ; ສືບຕໍ່ສະໜັບສະໜູນການພົວພັນຮ່ວມມືນຳກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ຕາມຄວາມເໝາະສົມ.

ບັນດາທ່ານເອກອັກຄະລັດຖະທູດ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ການຕ້ອນຮັບ ແລະໃຫ້ຂໍ້ມູນ, ຄຳເຫັນແນະນຳ, ແນວທາງນະໂຍບາຍ, ລະບຽບຫຼັກການ, ຄວາມຄາດຫວັງ ແລະ ຂໍ້ສະເໜີຕ່າງໆ ໃນຂົງເຂດວຽກງານທີ່ກ່ຽວຂ້ອງກັບການພົວພັນຮ່ວມມືກັບຕ່າງປະເທດ ແລະ ຈະນຳໄປຈັດຕັ້ງປະຕິບັດ, ໂຄສະນາເຜີຍແຜ່ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານໃນໄລຍະປະຈຳການຢູ່ຕ່າງປະເທດຂອງຕົນ.

**(ນາງ ອາລິນ ສຸພົມມະປະກິດ)**

# ສຳມະນາການຈັດຕັ້ງປະຕິບັດກົນໄກການປະສານງານ ລະຫວ່າງ ກບຜ ກັບ ບັນດາກະຊວງ-ອົງການທີ່ກ່ຽວຂ້ອງ




(ສພຊ) - ກອງປະຊຸມສຳມະນາການຈັດຕັ້ງປະຕິບັດກົນໄກການປະສານງານລະຫວ່າງກຳມາທິການບັນດາເຜົ່າ ກັບບັນດາກະຊວງ-ອົງການທີ່ກ່ຽວຂ້ອງ ໄດ້ຈັດຂຶ້ນໃນວັນທີ 18-19 ກໍລະກົດ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າ (ກບຜ) ເຊິ່ງທ່ານກ່າວວ່າ: ຈຸດປະສົງຂອງກອງປະຊຸມ ກໍເພື່ອທົບທວນຄືນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງກະຊວງ-ອົງການ ຕາມທີ່ກຳນົດໄວ້ໃນກົດໝາຍ, ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ ໃນການຕິດຕາມກວດກາ, ການເຄື່ອນໄຫວວຽກງານຂອງກຳມາທິການບັນດາເຜົ່າໄລຍະຜ່ານມາ; ເພື່ອຍົກສູງຄຸນນະພາບການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍກົນໄກການປະສານງານລະຫວ່າງກຳມາທິການບັນດາເຜົ່າສະພາແຫ່ງຊາດກັບບັນດາກະຊວງ-ອົງການທີ່ກ່ຽວຂ້ອງ ສະບັບເລກທີ 109/ຄປຈ, ລົງວັນທີ 11/5/2023 ໃນຕໍ່ໜ້າ ທັງເປັນການຍົກສູງຄຸນນະພາບການເຄື່ອນໄຫວວຽກງານຕາມ 3 ພາລະບົດບາດຂອງສະພາແຫ່ງຊາດ. ທ່ານໃຫ້ຮູ້ອີກວ່າ ກອງປະຊຸມຄັ້ງນີ້ ຈະໄດ້ແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດມະຕິດັ່ງກ່າວໃນໄລຍະຜ່ານມາ ວ່າມີຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຈະມີວິທີການແກ້ໄຂແນວໃດໃນຕໍ່ໜ້າ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດຕີລາຄາການຈັດຕັ້ງປະຕິບັດມະຕິສະບັບເລກທີ 109/ຄປຈ, ລົງວັນທີ 11/5/2023 ໃນໄລຍະຜ່ານມາ ແລະ ການປະກອບຄຳເຫັນຂອງບັນດາຜູ້ຕາງໜ້າຈາກຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າສະພາປະຊາຊົນນະຄອນຫຼວງວຽງຈັນ, ສູນກາງແນວລາວສ້າງຊາດ, ກະຊວງພາຍໃນ, ກະຊວງກະສິກຳ ແລະ ປ່າໄມ້, ສູນກາງສະຫະພັນແມ່ຍິງລາວ, ສູນກາງສະຫະພັນກຳມະບານລາວ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ, ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ທະນາຄານພັດທະນາຊົນນະບົດ (ທະນາຄານນະໂຍບາຍ).

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ກົງທະນູຄຳ ພິພັດເສລີ)**

# ມອບ-ຮັບ ລະບົບຖານຂໍ້ມູນ ຄຸ້ມຄອງຄຳຮ້ອງຂໍຄວາມເປັນທຳ




(ສພຊ)-ພິທີມອບ-ຮັບລະບົບຖານຂໍ້ມູນຄຸ້ມຄອງຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ (ຄປຈ ສພຊ) ໄດ້ຈັດຂຶ້ນໃນວັນທີ 12 ກໍລະກົດ 2024 ເຊິ່ງມອບໂດຍທ່ານ ເມັດທິວ ເຮັຈສ (Matthew Hedges) ຜູ້ອຳນວຍການພາກພື້ນອາຊີ-ປາຊີຟິກ ແລະ ອາເມລິກາ, ມູນນິທິເວສມິນສເຕີເພື່ອປະຊາທິປະໄຕ (Westminster Foundation for Democracy - WFD) ຮັບໂດຍທ່ານ ຣສ. ປອ. ວຽງວິໄລ ທ່ຽງຈັນໄຊ ຮອງປະທານກຳມາທິການຍຸຕິທຳ; ເຂົ້າຮ່ວມມີຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານຈຳນວນໜຶ່ງພາຍໃນ ສພຊ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ໃນພິທີ, ທ່ານ ຣສ. ປອ. ວຽງວິໄລ ທ່ຽງຈັນໄຊ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈມາຍັງມູນນິທິ ເວສມິນສເຕີ ທີ່ໄດ້ສະໜັບສະໜູນດ້ານງົບປະມານໃຫ້ແກ່ການສ້າງຖານຂໍ້ມູນ ແລະ ບໍລິສັດ MTS ທີ່ພະຍາຍາມຂຽນໂປຣແກມຖານຂໍ້ມູນນີ້ຂຶ້ນມາສຳເລັດໂດຍພື້ນຖານ. ການສ້າງຖານຂໍ້ມູນການຄຸ້ມຄອງຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ ໄດ້ລິເລີ່ມນັບແຕ່ກຳມາທິການຍຸຕິທຳໄດ້ສ້າງຕັ້ງຂຶ້ນໃນສະພາແຫ່ງຊາດຊຸດທີ VIII ຍ້ອນເຫັນໄດ້ຄວາມສຳຄັນຂອງວຽກງານການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງ ຄປຈສພຊ ກໍຄືການຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງແຕ່ລະກຳມາທິການ ທັງເປັນເຄື່ອງມືຊ່ວຍຄະນະປະຈຳສະພາແຫ່ງຊາດ ໃນການບັນທຶກ, ໄຈ້ແຍກ, ກວດກາ ແລະ ຄຸ້ມຄອງຂໍ້ມູນຄຳຮ້ອງຂໍຄວາມເປັນທຳທີ່ຍື່ນເຂົ້າມາ ໃຫ້ເປັນລະບົບ, ມີຄວາມວ່ອງໄວ ແລະ ມີຄວາມສະດວກຫຼາຍຂຶ້ນໂດຍສະເພາະການຕິດຕາມກວດກາ ແລະ ສະໜອງຂໍ້ມູນຄຳຮ້ອງຂໍຄວາມເປັນທຳ; ໃນໄລຍະຜ່ານມາ ການບັນທຶກ, ໄຈ້ແຍກ, ກວດກາ ແລະ ການຄຸ້ມຄອງຂໍ້ມູນຄຳຮ້ອງຂໍຄວາມເປັນທຳ ແມ່ນປະຕິບັດດ້ວຍຮູບການ ແລະ ວິທີການຈົດບັນທຶກໃສ່ປຶ້ມ ເຮັດໃຫ້ວຽກງານດັ່ງກ່າວມີຄວາມຊັກຊ້າ ແລະ ຫຍຸ້ງຍາກໃນການຕິດຕາມກວດກາຄືນ, ເກັບຮັກສາໃນຮູບແບບເປັນເອກະສານ ເຊິ່ງແຕ່ລະປີເພີ່ມຂຶ້ນເປັນຈຳນວນຫຼາຍ ຕ້ອງໄດ້ໃຊ້ພື້ນທີ່ໃນການເກັບຮັກສາ ແລະ ບາງຄັ້ງກໍເສຍຫາຍ, ການເຮັດວຽກມີຄວາມຕ້ອງການພະນັກງານຫຼາຍຄົນມາຮັບຜິດຊອບ ເນື່ອງຈາກຄຳຮ້ອງຂໍຄວາມເປັນທຳມີຈຳນວນຫຼາຍ. ດ້ວຍເຫດ ແລະ ຜົນດັ່ງກ່າວ, ກຳມາທິການຍຸຕິທຳ ໃນນາມເປັນໃຈກາງຮັບຄຳຮ້ອງຂໍຄວາມເປັນທຳໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ຈຶ່ງໄດ້ຄົ້ນຄວ້າສ້າງຖານຂໍ້ມູນການຄຸ້ມຄອງຄຳຮ້ອງຂໍຄວາມເປັນທຳຂຶ້ນມາ ເພື່ອເຮັດໃຫ້ການຄຸ້ມຄອງຂໍ້ມູນ ເຂົ້າ-ອອກ ເປັນລະບົບລວມສູນ, ທັນສະໄໝ ແລະ ສາມາດຕິດຕາມກວດກາການຈໍລະຈອນເອກະສານ, ກຳນົດເວລາໃນແຕ່ລະຂັ້ນຕອນຂອງການຄົ້ນຄວ້າ, ພິຈາລະນາຄຳຮ້ອງຂໍຄວາມເປັນທຳຢູ່ທຸກບ່ອນ ແລະ ທຸກເວລາ, ສ້າງຄວາມສະດວກ, ວ່ອງໄວ ແລະ ຈັດລະບົບຂໍ້ມູນເອກະສານຄຳຮ້ອງຂໍຄວາມເປັນທຳ ໃຫ້ເປັນລະບົບຫຼາຍຂຶ້ນ, ປະຢັດພື້ນທີ່ໃນການເກັບຮັກສາເອກະສານ ແລະ ຫຼຸດຜ່ອນຈຳນວນບຸຄະລາກອນທີ່ຮັບຜິດຊອບວຽກຄຸ້ມຄອງຄຳຮ້ອງຂໍຄວາມເປັນທຳ.

ທ່ານກ່າວຕື່ມວ່າ: ພາຍຫຼັງຖານຂໍ້ມູນການຄຸ້ມຄອງຄຳຮ້ອງຂໍຄວາມເປັນທຳ ໄດ້ຖືກນຳໃຊ້ຢ່າງເປັນລະບົບຄົບຊຸດແລ້ວ ລະບົບດັ່ງກ່າວ ຈະຊ່ວຍແບ່ງເບົາ ແລະ ສ້າງຄວາມຊັດເຈນໃຫ້ແກ່ວຽກງານການຄຸ້ມຄອງຂໍ້ມູນຄຳຮ້ອງຂໍຄວາມເປັນທຳ ຫຼາຍຂຶ້ນ; ແຕ່ຄຽງຄູ່ດ້ານດີ, ກໍຍັງມີບາງບັນຫາ ແລະ ສິ່ງທ້າທາຍທີ່ຍັງເປັນຫ່ວງ ເປັນຕົ້ນ: 1. ການສ້າງພະນັກງານເພື່ອຮັບຜິດຊອບວຽກງານດັ່ງກ່າວ ໃຫ້ສາມາດສືບທອດປ່ຽນແທນ ແລະ ຮັກສາລະບົບສາມາດໃຫ້ນຳໃຊ້ໄດ້ຍືນຍົງ; 2. ຄວາມຕ້ອງການດ້ານອຸປະກອນ ເປັນຕົ້ນ: ເຄື່ອງເຊີບເວີ, ຄອມພິວເຕີ, ເຄື່ອງສະແກນ ແລະ ອື່ນໆ ທີ່ຮັບໃຊ້ໃຫ້ແກ່ຖານຂໍ້ມູນ; 3. ງົບປະມານໃນການບຳລຸງຮັກສາເຄື່ອງເຊີບເວີ, ອິນເຕີເນັດ ແລະ ອື່ນໆ ເພື່ອຮັບປະກັນເຮັດໃຫ້ລະບົບຖານຂໍ້ມູນທີ່ເປັນລະບົບອອນລາຍ ໄດ້ຖືກນຳໃຊ້ຍາວນານ ແລະ ຍືນຍົງ; 4. ການພັດທະນາລະບົບຕື່ມ ໃຫ້ສາມາດເຊື່ອມຈອດ ແລະ ກວມໄປເຖິງສະພາປະຊາຊົນຂັ້ນແຂວງໃນທົ່ວປະເທດ ເພື່ອໃຫ້ສາມາດຄຸ້ມຄອງ ແລະ ນຳໃຊ້ຮ່ວມກັນໄດ້, ພ້ອມທັງການພັດທະນາກ້າວໄປສູ່ການຮັບຄຳຮ້ອງຜ່ານທາງລະບົບອີເລັກໂຕຣນິກ ແລະ ທັນເປັນລະບົບດິຈິຕອນເຕັມຮູບແບບໃນອະນາຄົດ.

**(ກົງທະນູຄຳ ພິພັດເສລີ)**

# ແມ່ຍິງກົມການເງິນ ສະຫຼຸບການຈັດຕັ້ງປະຕິບັດວຽກງານ



(ສພຊ) - ວັນສຸກທີ 19 ກໍລະກົດຜ່ານມາ, ໜ່ວຍແມ່ຍິງຮາກຖານກົມການເງິນ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ (2018-2024) ໂດຍການເປັນປະທານຮ່ວມຂອງສະຫາຍ ນາງ ດາວເພັດ ສີຫາວົງ ຄະນະພັກຮາກຖານຄະນະເລຂາທິການສະພາແຫ່ງຊາດ, ຮອງເລຂາໜ່ວຍພັກກົມການເງິນ, ສະຫາຍ ນາງ ຄຳຫຼ້າ ສິດທະຈອນ ກຳມະການຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ແລະ ສະຫາຍ ນາງ ເຂັມພອນ ພຸດທະພັນກຳມະການໜ່ວຍພັກ, ຫົວໜ້າໜ່ວຍແມ່ຍິງກົມການເງິນ; ມີບັນດາສະຫະພັນ ແລະ ໜ່ວຍແມ່ຍິງພາຍໃນສະພາແຫ່ງຊາດ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມທັງໝົດ 16 ສະຫາຍ, ຍິງ 14 ສະຫາຍ.

ຜູ້ແທນກອງປະຊຸມ 8 ສະຫາຍ ໄດ້ເປັນເອກະສັນຮັບຮອງເອົາບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ແຕ່ປີ 2018 ຮອດປັດຈຸບັນ ແລະ ທິດທາງແຜນການເຄື່ອນໄຫວວຽກງານ 5 ປີຕໍ່ໜ້າ, ບົດສຳຫຼວດການນຳພາລວມຂອງຄະນະໜ່ວຍແມ່ຍິງກົມການເງິນ; ກອງປະຊຸມໄດ້ຜ່ານຂໍ້ຕົກລົງຮັບຮອງເອົາການແຕ່ງຕັ້ງຄະນະໜ່ວຍແມ່ຍິງຮາກຖານກົມການເງິນຊຸດໃໝ່ ສະບັບເລກທີ 35/ສຍ.ສພຊ, ລົງວັນທີ 15 ກໍລະກົດ 2024 ໂດຍແຕ່ງຕັ້ງສະຫາຍ ນາງ ເຂັມພອນ ພຸດທະພັນ ເປັນຫົວໜ້າ, ສະຫາຍ ນາງ ຄຳກ້ຽງ ເພັດມີໄຊ ເປັນຮອງຫົວໜ້າ ແລະ ສະຫາຍ ນາງ ສຸດາລັດ ໄຊຍະສິດ ເປັນຄະນະ.

ສະຫາຍ ນາງ ດາວເພັດ ສີຫາວົງ ໄດ້ຮຽກຮ້ອງໃຫ້ຄະນະໜ່ວຍແມ່ຍິງຮາກຖານກົມການເງິນຊຸດໃໝ່ ເອົາໃຈໃສ່ຊີ້ນຳ-ນຳພາການເມືອງ-ແນວຄິດຂອງສະມາຊິກ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ເຕົ້າໂຮມຄວາມສາມັກຄີ, ຊຸກຍູ້ສະມາຊິກແມ່ຍິງເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງຢ່າງເປັນເຈົ້າການ; ປັບປຸງແບບແຜນການນຳພາ, ແບບແຜນວິທີເຮັດວຽກ ຢ່າງມີວິທະຍາສາດ ແລະ ມີຫົວຄິດປະດິດສ້າງ ບົນພື້ນຖານລະບຽບຫຼັກການ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນຢ່າງຈະແຈ້ງ ໄປຄຽງຄູ່ກັບການຕິດຕາມກວດກາ, ປະເມີນ, ຖອດຖອນບົດຮຽນເປັນແຕ່ລະໄລຍະ; ດຳເນີນຊີວິດການເມືອງເປັນປົກກະຕິ ໂດຍຖືເອົາການຕຳນິຕິຊົມຕົນເອງ, ຕິຊົມເຊິ່ງກັນແລະກັນໃຫ້ເລິກເຊິ່ງ ແລະ ກວ້າງຂວາງກວ່າເກົ່າ; ຕັ້ງໜ້າປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງແມ່ຍິງລາວ ຕິດພັນກັບຂໍ້ແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ເຊິ່ງເປັນພື້ນຖານປັດໄຈສຳຄັນເພື່ອເຮັດໃຫ້ໜ່ວຍແມ່ຍິງກົມການເງິນ ສາມາດຍາດໄດ້ຜົນງານທີ່ດີເດັ່ນຂຶ້ນກວ່າເກົ່າ; ພ້ອມກັນນັ້ນ, ກໍຕ້ອງເອົາໃຈໃສ່ຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 3 ດີ ຂອງແມ່ຍິງ ໃຫ້ເປັນຂະບວນຟົດຟື້ນ, ຊີ້ນຳ-ນຳພາສະມາຊິກແມ່ຍິງເຮັດລ້ອນໜ້າທີ່ເປັນເສນາທິການໃຫ້ແກ່ການນຳ ກໍຄືກົມການເງິນໃນຕໍ່ໜ້າ ໃຫ້ມີໝາກຜົນອັນຈົບງາມ.

**(ນາງ ອາລິນ ສຸພົມມະປະດິດ)**

# ຄະນະຜູ້ແທນສະພາແຫ່ງຊາດລາວ ສຳເລັດການເຂົ້າຮ່ວມກອງປະຊຸມໃຫຍ່ APF ຄັ້ງທີ 49




(ສພຊ) - ລະຫວ່າງວັນທີ 04-09 ກໍລະກົດຜ່ານມາ, ທ່ານ ປອ. ຄຳແສນ ສີສະວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ, ຄະນະສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ, ກຳມະການສູນກາງແນວລາວສ້າງຊາດ, ຄະນະກຳມາທິການພົວພັນເຊື້ອຊາດລາວໃນຕ່າງປະເທດ ພ້ອມດ້ວຍຄະນະຊາວໜຸ່ມສະພາແຫ່ງຊາດລາວ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມໃຫຍ່ສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (APF) ຄັ້ງທີ 49 ແລະ ກອງປະຊຸມໃຫຍ່ຄັ້ງທີ 10 ສະມັດຊາລັດຖະສະພາຊາວໜຸ່ມທີ່ໃຊ້ພາສາຝຣັ່ງ ທີ່ມົງເທຣອານ, ປະເທດການາດາ ເຊິ່ງມີຄະນະຜູ້ແທນຈາກປະເທດທີ່ໃຊ້ພາສາຝຣັ່ງ49ປະເທດພ້ອມດ້ວຍຕົວແທນຈາກອົງການຝຣັ່ງໂກໂຟນີສາກົນ (OIF), ຄະ ນະເລຂາທິການໃຫຍ່ສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ, ອົງການມະຫາວິທະຍາໄລທີ່ໃຊ້ພາສາຝຣັ່ງ (AUF), ອົງການອາຫານ ແລະ ການກະເສດ ແຫ່ງສະຫະປະຊາຊາດ (FAO) ລວມທັງໝົດ 510 ທ່ານ ເຂົ້າຮ່ວມ.

ກອງປະຊຸມໃຫຍ່ຂອງ APF ຄັ້ງນີ້ ດຳເນີນພາຍໃຕ້ຫົວຂໍ້ "ເຄື່ອງປັນຍາປະດິດ ແລະລັດຖະສະພາ" ແລະ ກອງປະຊຸມໃຫຍ່ຊາວໜຸ່ມ APF ກໍໄດ້ດຳເນີນພາຍໃຕ້ 4 ຫົວຂໍ້ຕົ້ນຕໍຄື: "ການຕໍ່ສູ້ກັບຄວາມວຸ້ນວາຍໃນກຸ່ມໄວໜຸ່ມ", "ການສົ່ງເສີມການນຳໃຊ້ພາສາຝຣັ່ງຢ່າງເປັນທາງການ ແລະ ຄວາມນິຍົມໃນສະຕະວັດທີ XXI", "ການຕິດຕາມກວດກາການ ເຄື່ອນໄຫວຂອງຜູ້ທີ່ມີອິດທິພົນໃນໄວໜຸ່ມ" ແລະ "ການຊຸກຍູ້ໄວໜຸ່ມເຄື່ອນໄຫວໃນຊີວິດຈິງ ຫຼາຍກວ່າການນຳໃຊ້ສັງຄົມອອນລາຍ". ພ້ອມດຽວກັນ, ກໍຍັງມີກອງປະຊຸມຄະນະບໍລິຫານງານ, ກຳມາທິການປະຈຳຕ່າງໆຂອງ APF ເປັນຕົ້ນ: ກອງປະຊຸມກຳມາທິການການເມືອງ; ກຳມາທິການການສຶກສາ, ການສື່ສານ ແລະ ວຽກງານວັດທະນະທຳ; ກຳມາທິການວຽກງານລັດຖະສະພາ ແລະ ກຳມາທິການວຽກງານເສດຖະກິດ, ສັງຄົມ ແລະສິ່ງແວດລ້ອມ; ກອງປະຊຸມເຄືອຂ່າຍລັດ ຖະສະພາເພດຍິງ; ກອງປະຊຸມເຄືອຂ່າຍລັດຖະສະພາໜຸ່ມ ແລະ ກອງປະຊຸມປີ່ນອ້ອມອື່ນໆທີ່ດຳເນີນຄວບຄູ່ກັນໄປ.

ກອງປະຊຸມໃຫຍ່ APF ໄດ້ຮັບຟັງລາຍງານສະພາບການໃນບັນດາປະເທດທີ່ໃຊ້ພາສາຝຣັ່ງຈາກຜູ້ຕາງໜ້າຂອງແຕ່ລະພາກພື້ນ, ພິຈາລະນາຮັບຮອງເອົາຂອບແຜນຍຸດທະສາດ APF ປີ 2025-2030, ຮັບຮອງເອົາການປັບປຸງທຳມະນູນຂອງAPF, ຮັບຟັງການຮັບຮອງທັດສະນະຂອງ APF ໃນກອງປະຊຸມສຸດຍອດຄັ້ງທີ19ຂອງອົງການຝຣັ່ງໂກໂຟນີສາກົນ ພາຍໃຕ້ຫົວຂໍ້: "ປັບປຸງການຍ້າຍຖິ່ນຖານຂອງພົນລະເມືອງໃນບັນດາປະເທດທີ່ໃຊ້ພາສາຝຣັ່ງ ເພື່ອຊຸກຍູ້ການສ້າງສາ, ນະວັດຕະກຳແລະການປະກອບການ", ບົດລາຍງານການເຄື່ອນໄຫວງົບປະມານທີ່ສະຫຼຸບບັນຊີລາຍຈ່າຍສຳລັບປີການເງິນໃນປີ 2023 ແລະ ການປັບປຸງລາຍຈ່າຍໃນປີ2024, ກວດກາຮ່າງ ແລະ ຮັບຮອງມະຕິຂອງ 4 ກຳມາທິການ ແລະເຄືອຂ່າຍປະຈຳຂອງAPF ແລະຮັບຟັງຂໍ້ຕົກລົງຮ່ວມມືຂອງບັນດາຄູ່ຮ່ວມພັດທະນາຂອງAPF; ນອກຈາກນີ້, ຍັງໄດ້ຮ່ວມກັນປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນກ່ຽວກັບຫຼາຍບັນຫາສຳຄັນທີ່ເປັນສິ່ງທ້າທາຍ ແລະ ຄວາມກັງວົນຮ່ວມກັນໃນແຕ່ລະພາກພື້ນ ໂດຍສະເພາະແມ່ນໃນບັນດາປະເທດຝຣັ່ງໂກໂຟນ.

ໃນການເຂົ້າຮ່ວມກອງປະຊຸມຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ສະເໜີບົດປະກອບຄຳເຫັນກ່ຽວກັບສະພາບການພາກພື້ນ ແລະ ສາກົນ, ສະພາບການພັດທະນາເສດຖະກິດ-ສັງຄົມໃນສປປລາວ, ການຮ່ວມມືລະຫວ່າງ ສປປ ລາວ ກັບອົງການຝຣັ່ງໂກໂຟນີສາກົນ ແລະ ອົງການສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ ໃນການເພີ່ມທະວີການຮ່ວມມືດ້ານການສຶກສາ, ກະສິກຳ, ສາທາລະນະສຸກ, ການທ່ອງທ່ຽວ, ການແລກປ່ຽນວັດທະນະທຳ, ການສົ່ງເສີມການຮຽນ-ການສອນພາສາຝຣັ່ງ ແລະ ອື່ນໆ ເພື່ອເສີມຂະຫຍາຍບົດບາດຂອງ APF ແລະ OIF ໃຫ້ສູງເດັ່ນຂຶ້ນໃນພາກພື້ນແລະສາກົນ; ພ້ອມກັນນີ້, ຄະນະຜູ້ແທນຊາວໜຸ່ມຍັງໄດ້ເຂົ້າຮ່ວມກ່າວບົດຄວາມພາຍໃຕ້ຫົວຂໍ້ "ຄວາມຫຼາກຫຼາຍທາງດ້ານເຊື້ອຊາດຂອງການມີສ່ວນຮ່ວມໃນການສົ່ງເສີມການນຳໃຊ້ພາສາຝຣັ່ງ" ແລະ ເຂົ້າຮ່ວມໂຕ້ວາທີລະຫວ່າງຄະນະຜູ້ແທນບັນດາປະເທດຝຣັ່ງໂກໂຟນ ໂດຍໄດ້ປະກອບຄຳເຫັນໃນຖານະຝ່າຍສະເໜີ ແລະ ຝ່າຍທີ່ເຫັນຕ່າງ ເຊິ່ງໄດ້ດຳເນີນພາຍໃຕ້ 3 ຫົວຂໍ້ສຳຄັນ: "ພົນລະເມືອງທຸກຄົນຄວນໄດ້ຮັບຜົນປະໂຫຍດຈາກລາຍຮັບສາກົນ", "ການຄັດເລືອກເຂົ້າເປັນທະຫານເພື່ອຮັບໃຊ້ຊາດຄວນກຳນົດເປັນການບັງຄັບ" ແລະ "ການສ້າງຄວາມດີ ແມ່ນການສ້າງພາບລວງຕາ".

ໃນຕອນທ້າຍຂອງກອງປະຊຸມ ໄດ້ຮັບຮອງເອົາວັນເວລາ ແລະ ສະຖານທີ່ການເປັນເຈົ້າພາບຈັດກອງປະຊຸມໃຫຍ່ APF ຄັ້ງຕໍ່ໄປ ເຊິ່ງຈະມີຂຶ້ນໃນເດືອນກໍລະກົດ2025ທີ່ນະຄອນຫຼວງປາຣີ, ປະເທດຝຣັ່ງ.

# ຍົກລະດັບເສນາທິການດ້ານເນື້ອໃນ ແລະ ການກະກຽມກອງປະຊຸມ



(ສພຊ) - ຄະນະເລຂາທິການສະພາແຫ່ງຊາດ (ຄລສ) ໄດ້ຈັດກອງປະຊຸມເຝິກອົບຮົມວຽກງານເນື້ອໃນແລະຂັ້ນຕອນການກະກຽມຮອບດ້ານໃຫ້ແກ່ກອງປະຊຸມສະໄໝສາມັນຂອງສະພາປະຊາຊົນຂັ້ນແຂວງ(ສພຂ) ໃນລະຫວ່າງວັນທີ 12-14 ກໍລະກົດນີ້ທີ່ເມືອງວັງວຽງແຂວງວຽງຈັນ ໂດຍການເປັນປະທານຂອງທ່ານສິງຄຳວົງພະຈັນຮອງເລຂາທິການສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານເລຂາທິການ, ຮອງເລຂາທິການ ຜູ້ຊີ້ນຳຂະແໜງຄົ້ນຄວ້າ-ສັງລວມແລະພະນັກງານຂະແໜງຄົ້ນຄວ້າ-ສັງລວມ ຂອງ ສພຂ 6 ແຂວງ (ນະຄອນຫຼວງວຽງຈັນ, ຫົວພັນ, ຊຽງຂວາງ, ວຽງຈັນ, ບໍລິຄຳໄຊ, ໄຊສົມບູນ) ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງຂອງ ຄລສ.

ຈຸດປະສົງຂອງການເຝິກອົບຮົມ ກໍເພື່ອຍົກສູງຄຸນນະພາບໃນການເປັນເສນາທິການທາງດ້ານເນື້ອໃນ ແລະ ຮັບປະກັນຄວາມພ້ອມໃນການກະກຽມ ແລະ ຮັບໃຊ້ກອງປະຊຸມສະໄໝສາມັນຂອງສະພາປະຊາຊົນຂັ້ນແຂວງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;ຍົກສູງຂີດຄວາມສາມາດທາງດ້ານເນື້ອໃນ ໂດຍສະເພາະບັນດາເອກະ ສານທີ່ຕິດພັນກັບກອງປະຊຸມ ສພຂ ໃຫ້ມີຄຸນນະພາບ ທັງເປັນການຖ່າຍທອດ ແລະ ແລກປ່ຽນບົດຮຽນທາງດ້ານທິດສະດີ, ພຶດຕິກຳຕົວຈິງ, ການສ້າງຄວາມເຂັ້ມແຂງທາງດ້ານການຂີດຂຽນເອກະສານປີ່ນອ້ອມ ໃຫ້ແກ່ກອງປະຊຸມສະໄໝສາມັນຂອງ ສພຂ ເປັນຕົ້ນບົດສັງລວມຄວາມເຫັນ, ຮ່າງຄຳຖາມເຈາະຈີ້ມ, ບົດສະຫຼຸບ, ການເປັນເລຂານຸການກອງປະຊຸມຮອບດ້ານ ແລະ ເອກະສານອື່ນໆ.

ຜູ້ເຂົ້າຮ່ວມເຝິກອົບຮົມໄດ້ຮັບຟັງການສະເໜີບົດຮຽນຕົ້ນຕໍຄື: ການຮ່າງບົດໂອ້ລົມໃຫ້ການນຳ ແລະ ບົດສັງລວມຄຳເຫັນໃຫ້ປະທານກອງປະຊຸມ, ການສ້າງຄຳຖາມເຈາະຈີ້ມແລະບົດປະກອບຄຳເຫັນຕໍ່ກອງປະຊຸມ, ຂັ້ນຕອນການກະກຽມວຽກງານຮອບດ້ານໃຫ້ແກ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ; ຈາກນັ້ນ. ກໍສົນທະນາແລກປ່ຽນຄຳເຫັນເຊິ່ງກັນ ແລະ ກັນ, ແລະ ແບ່ງກຸ່ມເພື່ອເຝິກຫັດຕົວຈິງແຕ່ລະເນື້ອໃນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິອາຊີ (The Asia Foundation - TAF) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ອານຸສອນ ພູມມີທອນ)**

# ຍົກສູງຄວາມສາມາດການຄົ້ນຄວ້າຄັດຫຍໍ້



(ສພຊ) - ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໄດ້ຈັດກອງປະຊຸມເຝິກອົບຮົມຍົກສູງຂີດຄວາມສາມາດການຄົ້ນຄວ້າຄັດຫຍໍ້, ການສົມທຽບຮ່າງກົດໝາຍ ແລະການຄົ້ນຄວ້າຄັດຫຍໍ້ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ແກ່ພະນັກງານຂອງຕົນ ແລະ ກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ໃນວັນທີ 15-19 ກໍລະກົດນີ້ ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ເຊິ່ງວິທະຍາກອນແມ່ນມາຈາກມູນນິທິອາຊີ (The Asia Fountion-TAF) ທ່ານ ມານະ ສຸທິຈັກ ທີ່ປຶກສາດ້ານການພັດທະນາເສດຖະກິດ ແລະ ການຄ້າລະຫວ່າງປະເທດ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດຮຽນ: ພາບລວມຂອງຂະບວນການສ້າງນິຕິກຳ ແລະ ການບໍລິການຄົ້ນຄວ້ານິຕິກຳ ຂອງ ຫວຽດນາມ, ອາເມລິກາ, ຝຣັ່ງ, ຈີນ; ວິທີການຄົ້ນຄວ້າ ແລະ ຮູບແບບບົດຄັດຫຍໍ້ນະໂຍບາຍ; ຂອບເຂດການຄົ້ນຄວ້າ ແລະ ການກຳນົດຂໍ້ມູນທີ່ຕ້ອງການ. ຈາກນັ້ນ, ກໍໄດ້ສົນທະນາແລກປ່ຽນຄຳເຫັນເຊິ່ງກັນແລະກັນ, ແບ່ງກຸ່ມເພື່ອເຝິກຫັດຕົວຈິງແຕ່ລະເນື້ອໃນ. ໃນມື້ສຸດທ້າຍ, ໄດ້ມີພິທີມອບໃບຢັ້ງຢືນຜົນສຳເລັດໃຫ້ແກ່ນັກເຝິກອົບຮົມອີກດ້ວຍ.

ທ່ານ ສິນທະລາ ຫຼ້າສຸກສະໄໝ ມີຄຳເຫັນວ່າ: ກອງປະຊຸມຄັ້ງນີ້ ສາມາດຕີລາຄາໄດ້ວ່າມີຜົນສຳເລັດອັນຈົບງາມຕາມຈຸດປະສົງ ແລະລະດັບຄາດໝາຍ, ແຕ່ພວກເຮົາຍັງຈະຕ້ອງໄດ້ສືບຕໍ່ພ້ອມກັນຄົ້ນຄວ້າ ແລະ ຮຽນຮູ້ຕື່ມໃຫ້ກວ້າງຂວາງກວ່າເກົ່າ; ຜົນສຳເລັດທີ່ເປັນຮູບປະທຳໃນໄລຍະຍາວແລະມີໝາກຜົນອັນກວ້າງຂວາງນັ້ນ ແມ່ນອີງໃສ່ການຈັດຕັ້ງຜັນຂະຫຍາຍບົດຮຽນເຂົ້າໃນວຽກງານຕົວຈິງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ໄດ້ຮັບຜົນສຳເລັດສູງຂຶ້ນເລື້ອຍໆ.

ການເຝິກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກ TAF ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ອານຸສອນ ພູມມີທອນ)**

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON




## ສພຊ...

(ຕໍ່ຈາກໜ້າ 1)

ຮ່ວມຫຼາຍກວ່າ 200 ສະຫາຍ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 8 ສະໄໝທີ XI ໂດຍໄດ້ມີ 6 ບັນຫາໃຫຍ່ທີ່ໄດ້ພິຈາລະນາໃນກອງປະຊຸມຄົບຄະນະຂອງສູນກາງພັກ ເຊັ່ນ: 1. ຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024 ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ; 2. ການປະຕິຮູບລັດວິສາຫະກິດ; 3.ຕີລາຄາກ່ຽວກັບການຍົກສູງຄຸນນະພາບການດຳເນີນຄະດີຕາມຂະບວນຍຸຕິທຳ, ຕາມມະຕິເລກທີ112/ກມສພຂອງກົມການເມືອງສູນກາງພັກ;4.ການປັບປຸງຄຸນນະພາບການສຶກສາ ແລະການແກ້ໄຂບັນຫາການປະລະການຮຽນ, ການຂາດ ແຄນຄູສອນ; 5. ການກະກຽມເອກະສານຕົ້ນຕໍຂອງກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ; 6. ຈັດຕັ້ງປະຕິບັດວຽກງານຈຸດສຸມແຕ່ນີ້ຮອດກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 9 ໃນທ້າຍປີ 2024.

ກອງປະຊຸມຍັງໄດ້ຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການອະນຸມັດໃຫ້ພະນັກງານຮັບອຸດໜູນບຳນານ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຕຳແໜ່ງບໍລິຫານ (ຂັ້ນຫົວໜ້າກົມຂຶ້ນໄປ) ຈຳນວນ 2 ສະຫາຍ, ຂໍ້ຕົກລົງຂອງຄະນະເລຂາທິການສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຕຳແໜ່ງບໍລິຫານ ແລະ ການຜ່ານມະຕິ, ຂໍ້ຕົກລົງ ວ່າດ້ວຍການຍົກຍ້າຍພະນັກງານພາຍໃນສະພາແຫ່ງຊາດ.

ໃນໂອກາດນີ້, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີບາງຄຳເຫັນໂອ້ລົມ ໂດຍມີເນື້ອໃນຫຍໍ້ດັ່ງນີ້: 1. ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ-ລັດຖະກອນທີ່ ຢູ່ໃນກົງຈັກການຈັດຕັ້ງຂອງຕົນ ມີຄວາມອົດທົນ, ຕັ້ງໜ້າປະຕິບັດໜ້າທີ່ວຽກງານ, ພ້ອມກັນສູ້ຊົນຜ່ານຜ່າອຸປະສັກ, ຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆ, ພ້ອມກັນຮ່ວມແຮງຮ່ວມໃຈແກ້ໄຂໃຫ້ຊີວິດການເປັນຢູ່ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ; 2. ສືບຕໍ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງປັບປຸງ, ຮຽບຮຽງບັນດາຮ່າງກົດໝາຍ, ບັນດາມະຕິກອງປະຊຸມສະພາແຫ່ງຊາດແລະເອກະສານອື່ນໆທີ່ໄດ້ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ສຳເລັດໂດຍໄວ ເພື່ອສົ່ງໃຫ້ພາກສ່ວນກ່ຽວຂ້ອງ ພ້ອມກັນຈັດຕັ້ງປະຕິບັດໃຫ້ເກີດໝາກຜົນຕົວຈິງ; 3. ສືບຕໍ່ປັບປຸງລັດຖະທຳມະນູນ ສະບັບປີ 2015 ເຊິ່ງເປັນກົດໝາຍແມ່ທີ່ສຳຄັນພື້ນຖານຂອງປະເທດຊາດມີປະສິດທິຜົນ, ມີຄວາມສອດຄ່ອງກັບສະພາບຕົວຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາໃນປັດຈຸບັນ; 4. ພາຍຫຼັງສຳເລັດການດຳເນີນກອງປະຊຸມຂອງສະພາແຫ່ງຊາດແຕ່ລະຄັ້ງ, ໜ້າທີ່ສຳຄັນຂອງສະມາຊິກສະພາແຫ່ງຊາດ ແມ່ນການນຳເອົາຜົນສຳເລັດລົງໄປໂຄສະນາເຜີຍແຜ່ໃຫ້ປະຊາຊົນໄດ້ຮັບຮູ້, ເຂົ້າໃຈ ທັງເປັນໂອກາດພົບປະພໍ່ແມ່ປະຊາຊົນເພື່ອຮັບຟັງຄຳສະເໜີ, ຄວາມມຸ່ງມາດປາຖະໜາຂອງຜູ້ມີສິດເລືອກຕັ້ງ ແລະ ນຳເອົາບັນຫາຕ່າງໆມາສະເໜີຕໍ່ພາກສ່ວນກ່ຽວຂ້ອງເພື່ອມີວິທີການແກ້ໄຂ; 5. ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ມີການປະກາດການຕົກລົງຂອງຄະນະເລຂາທິການສູນກາງພັກ ກ່ຽວກັບການເລື່ອນຕຳແໜ່ງບໍລິຫານຂັ້ນສູນກາງຄຸ້ມຄອງ, ຄະນະປະຈຳພັກໄດ້ມີການຕົກລົງໃຫ້ບຸຄະລາກອນຂອງສະພາແຫ່ງຊາດທີ່ຄົບເງື່ອນໄຂຮັບນະໂຍບາຍອຸດໜູນບຳນານ, ໄດ້ຕົກລົງເລື່ອນຕຳແໜ່ງບໍລິຫານທີ່ສະພາແຫ່ງຊາດຄຸ້ມຄອງ, ການຍົກຍ້າຍສັບຊ້ອນຢູ່ພາຍໃນສະພາແຫ່ງຊາດຈຳນວນໜຶ່ງ ເຊິ່ງທັງໝົດນີ້ຈະເປັນການປັບປຸງກົງຈັກການຈັດຕັ້ງໃຫ້ສອດຄ່ອງກັບຄວາມຕ້ອງການຂອງໜ້າທີ່ວຽກງານ ແລະ ຄວາມຮູ້ຄວາມສາມາດຂອງພະນັກງານ.

**(ນາງ ສຸພາວັນ ທອນສະນິດ, ພາບ: ສອນສັກ ວັນວິໄຊ)**



## ປະເມີນ...

(ຕໍ່ຈາກໜ້າ 1)

ມະນູນຈາກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ເຈົ້າເມືອງ/ຮອງເຈົ້າເມືອງ, ຫົວໜ້າ/ຮອງຫົວໜ້າພະແນກການ-ອົງການທຽບເທົ່າພະແນກການ, ອະດີດການນຳຂອງແຂວງ ຕະຫຼອດຮອດແຂກຖືກເຊີນ ເຂົ້າຮ່ວມຫຼາຍກວ່າ 200 ທ່ານ.

ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນວ່າ: ເພື່ອເຮັດໃຫ້ການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ຄັ້ງນີ້ ໄດ້ຮັບໝາກຮັບຜົນ ແລະ ແທດເໝາະກັບສະພາບການຕົວຈິງຂອງທ້ອງຖິ່ນ ສະເໜີໃຫ້ບັນດາທ່ານຈົ່ງລົງເລິກຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນ ໂດຍຕິດພັນກັບການປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາຂະແໜງການ, ອົງການຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຮາກຖານ ເປັນຕົ້ນ: ການສ້າງຄວາມຮັບຮູ້, ເຂົ້າໃຈທີ່ຖືກຕ້ອງຕໍ່ລັດຖະທຳມະນູນ, ກົດໝາຍ, ການສ້າງສະຕິເຄົາລົບ, ປະຕິບັດລັດຖະທຳມະນູນແລະກົດໝາຍໃນຖັນແຖວສະມາຊິກພັກ, ພະນັກງານ-ລັດຖະກອນ, ນັກຮຽນຮູ້-ປັນຍາຊົນ, ນັກທຸລະກິດແລະປະຊາຊົນບັນດາເຜົ່າ; ໃຫ້ສະເໜີຄຳຄິດຄຳເຫັນຕໍ່ການປັບປຸງລັດຖະທຳມະນູນໂດຍສະເພາະເນື້ອໃນໝວດວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງແຂວງ, ຂັ້ນເມືອງ, ຂັ້ນຕາແສງແລະຂັ້ນບ້ານ, ການປະຕິບັດສິດ ແລະ ພັນທະຂອງພົນລະເມືອງລາວ, ຊາວຕ່າງດ້າວ ແລະ ຄົນບໍ່ມີສັນຊາດ. ຮຽກຮ້ອງມາຍັງບັນດາທ່ານຜູ້ແທນກອງປະຊຸມຈົ່ງໄດ້ເອົາໃຈໃສ່ສຸມສະຕິປັນຍາ, ຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ, ກະທັດຮັດ, ກົງໄປກົງມາ ເພື່ອເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດຕາມແຜນການ,ລະດັບຄາດໝາຍທີ່ວາງໄວ້.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດສະຫຼຸບການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ2015ແລະການປະກອບຄຳເຫັນ ລວມທັງຂໍ້ສະເໜີຕ່າງໆຈາກຕາງໜ້າຂົງເຂດອົງການຈັດຕັ້ງພັກ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະອົງການຈັດຕັ້ງມະຫາຊົນ; ຂົງເຂດສະພາປະຊາຊົນແຂວງ, ອົງການກວດສອບປະຈຳພາກ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ; ຂົງເຂດອົງການປົກຄອງແຂວງ; ກຸ່ມເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຜູ້ປະກອບການ, ວິສາຫະກິດ, ທະນາຄານ ແລະບັນດາອົງການປົກຄອງເມືອງພາຍໃນແຂວງຄຳມ່ວນ.

**(ນາງ ກິງໃຈ ແສງອຳພັນ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 25 ກໍລະກົດນີ້ ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສພຊ) ໄດ້ນຳພາຄະນະການນຳຂັ້ນສູງຂອງສະພາແຫ່ງຊາດ ເຂົ້າຮ່ວມພິທີວາງພວງມາລາ ແລະ ຂຽນປຶ້ມໄວ້ອາໄລ ໃຫ້ແກ່ການຈາກໄປຂອງສະຫາຍ ຫງວຽນ ຟູ ຈ້ອງ (Nguyễn Phú Trọng) ອະດີດເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ທີ່ສະຖານເອກອັກຄະລັດຖະທູດແຫ່ງ ສສ.ຫວຽດນາມ ປະຈຳ ສປປ ລາວ ເຊິ່ງມີເນື້ອໃນວ່າ: ໃນນາມສະພາແຫ່ງຊາດ ແຫ່ງ ສປປ ລາວ ແລະ ປະຊາຊົນລາວບັນດາເຜົ່າ, ພວກຂ້າພະເຈົ້າ ມີຄວາມເສົ້າສະຫຼົດໃຈ ແລະ ອາໄລອາວອນຢ່າງສຸດຊຶ້ງ ຕໍ່ການຈາກໄປຢ່າງບໍ່ມີວັນກັບຄືນຂອງສະຫາຍ ຫງວຽນ ຟູ ຈ້ອງ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ທັງເປັນອະດີດປະທານສະພາແຫ່ງຊາດຫວຽດນາມ ຊຸດທີ XI ແລະ XII.

ການຈາກໄປຂອງສະຫາຍ ຫງວຽນ ຟູ ຈ້ອງ ເປັນການສູນເສຍອັນໃຫຍ່ຫຼວງຂອງພັກ, ລັດ ແລະປະຊາຊົນຫວຽດນາມ ກໍຄືຂອງພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ; ເປັນການສູນເສຍຜູ້ນຳປະຕິວັດທີ່ໂດດເດັ່ນ, ອົງອາດກ້າ ແກ່ນ, ຜູ້ສືບທອດທີ່ຈົງຮັກພັກດີຢ່າງເລິກເຊິ່ງຕໍ່ລັດທິມາກ-ເລນິນ ແລະ ແນວຄິດໂຮ່ ຈີ ມິງ, ນັກທິດສະດີທີ່ມີວິໄສທັດວິທະຍາສາດກວ້າງໄກ ເຊິ່ງຕະຫຼອດຊີວິດແຫ່ງການເຄື່ອນໄຫວປະຕິວັດຂອງສະຫາຍ ໄດ້ມີຄຸນງາມຄວາມດີອັນດີເລີດຕໍ່ປະເທດຊາດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ.

ສະຫາຍ ຫງວຽນຟູຈ້ອງ ແມ່ນເພື່ອນມິດທີ່ບໍລິສຸດຜຸດຜ່ອງ ແລະສະໜິດສະໜົມທີ່ສຸດຂອງພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ໂດຍສະເພາະສະພາແຫ່ງຊາດລາວ; ສະຫາຍເປັນແວ່ນແຍງອັນແຈ້ງໃສໃຫ້ແກ່ການສ້າງລັດແຫ່ງອຳນາດກົດໝາຍສັງຄົມນິຍົມຫວຽດນາມ, ການເພີ່ມທະວີການຕິດຕາມກວດກາແລະຕ້ານການສໍ້ລາດບັງຫຼວງ ເພື່ອຄວາມຜ່ອງໃສຂອງພັກກຳອຳນາດ, ຄວາມຍຸຕິທຳໃນສັງຄົມ ແລະ ຄວາມສົມບູນພູນສຸກຂອງປະຊາຊົນຫວຽດນາມ. ສະພາແຫ່ງຊາດ ສປປ ລາວ ພວກຂ້າພະເຈົ້າ ຂໍຈົດຈຳຄຸນງາມຄວາມດີອັນໃຫຍ່ຫຼວງ, ຄວາມກ້າແກ່ນພິລະອາດຫານແລະຄວາມເປັນແບບຢ່າງທີ່ດີເລີດຂອງສະຫາຍ ຫງວຽນ ຟູ ຈ້ອງ ໄປຕະຫຼອດການະນານ.

ພວກຂ້າພະເຈົ້າ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງຈະຫັນເອົາຄວາມໂສກເສົ້າເສຍດາຍນີ້ ໃຫ້ກາຍເປັນເຫງົ້າພະລັງແຫ່ງຄວາມສາມັກຄີທົ່ວປວງຊົນທັງຊາດ ພາກັນສ້າງສາ ແລະ ພັດທະນາປະເທດຊາດຫວຽດນາມ ໃຫ້ບັນລຸເປົ້າໝາຍ "ເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ".

ໃນເວລາແຫ່ງຄວາມໂສກເສົ້າເສຍດາຍນີ້, ພວກຂ້າພະເຈົ້າ ຂໍແບ່ງເບົາຄວາມທຸກໂສກເສຍໃຈ, ຄວາມອາໄລອາວອນຢ່າງສຸດຊຶ້ງຮ່ວມກັບພັກ, ສະພາແຫ່ງຊາດ, ລັດຖະບານ, ແນວໂຮມປະເທດຊາດ, ຄອບຄົວ, ລູກຫຼານຍາດພີ່ນ້ອງ ແລະ ເພື່ອນມິດສະຫາຍ ກໍຄືປະຊາຊົນຫວຽດນາມ ດ້ວຍຄວາມຈິງໃຈມານະທີ່ນີ້ດ້ວຍ.

ຂໍໃຫ້ດວງວິນຍານຂອງສະຫາຍ ຫງວຽນ ຟູ ຈ້ອງ ຈົ່ງໄປສູ່ສຸຂະຕິດ້ວຍເຖີ້ນ!

ໃນຕອນເຊົ້າຂອງວັນດຽວກັນ, ທີ່ສະພາແຫ່ງຊາດ ໄດ້ຈັດພິທີເອົາທຸງຊາດລົງເຄິ່ງເສົາ ໂດຍມີສະຫາຍນາງອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ພ້ອມດ້ວຍບັນດາສະຫາຍຄະນະບໍລິຫານງານພັກ, ເລຂາ ແລະ ຮອງເລຂາບັນດາຮາກຖານພັກ ພ້ອມດ້ວຍສະມາຊິກພັກພາຍໃນ ສພຊ ເຂົ້າຮ່ວມ; ໂອກາດນີ້, ຕາງໜ້າຄະນະຈັດຕັ້ງພິທີ ໄດ້ອ່ານໂທລະເລກເສົ້າສະຫຼົດໃຈຂອງຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ.

ພັກ ແລະ ລັດຖະບານ ໄດ້ຈັດໄວ້ອາໄລລະດັບຊາດ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນັບທັງສະຖານເອກອັກຄະລັດຖະທູດ, ສຳນັກງານຜູ້ຕາງໜ້າສປປລາວທີ່ຕ່າງປະເທດ ໃນລະຫວ່າງວັນທີ25-26 ກໍລະກົດ 2024, ໃຫ້ເອົາທຸງຊາດລົງເຄິ່ງເສົາແລະງົດກິດຈະກຳມ່ວນຊື່ນທີ່ເປັນລັກສະນະມວນຊົນທຸກຮູບແບບ ເປັນເວລາສອງວັນດັ່ງກ່າວ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**



## ປະເມີນ...

(ຕໍ່ຈາກໜ້າ 1)

ໂດຍການເປັນປະທານຂອງ ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານ, ຜູ້ປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ) ທັງເປັນຫົວໜ້າກອງເລຂາຂອງ ຄລຊ; ມີບັນດາທ່ານການນຳຂັ້ນສູງ ແລະພະນັກງານຫຼັກແຫຼ່ງຈາກຂະແໜງການ, ອົງການຂອງ ນວ ແລະເມືອງທົ່ວນະຄອນຫຼວງ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນພິທີເປີດ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ໄດ້ກ່າວວ່າ: ເພື່ອເຮັດໃຫ້ ການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນຢູ່ນະຄອນຫຼວງວຽງຈັນ ໄດ້ຮັບໝາກຮັບຜົນ ແລະ ແທດເໝາະກັບສະພາບການຕົວຈິງ, ຂໍສະເໜີໃຫ້ບັນດາທ່ານຈົ່ງລົງເລິກຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນ ໂດຍຕິດພັນກັບການປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາຂະແໜງການ, ອົງການຂັ້ນນະຄອນຫຼວງ, ຂັ້ນເມືອງ ແລະຂັ້ນຮາກຖານທົ່ວນະຄອນຫຼວງວຽງຈັນ ເປັນຕົ້ນການສ້າງຄວາມຮັບຮູ້, ເຂົ້າໃຈທີ່ຖືກຕ້ອງຕໍ່ລັດຖະທຳມະນູນ ແລະ ກົດໝາຍ ຕິດພັນກັບການສ້າງສະຕິເຄົາລົບ ແລະປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຖັນແຖວພະນັກງານ-ລັດຖະກອນ, ສະມາຊິກພັກ, ນັກຮຽນຮູ້ປັນຍາຊົນ, ນັກທຸລະກິດ ແລະ ປະຊາຊົນບັນດາເຜົ່າ. ພ້ອມກັນນີ້, ກໍໃຫ້ສະເໜີຄຳຄິດຄຳເຫັນຕໍ່ການປັບປຸງເນື້ອໃນຂອງລັດຖະທຳມະນູນ ໂດຍສະເພາະການປັບປຸງໝວດວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ໝວດວ່າດ້ວຍອົງການປົກຄອງທ້ອງຖິ່ນ; ການປະຕິບັດສິດ ແລະ ພັນທະຂອງພົນລະເມືອງລາວ, ຊາວຕ່າງດ້າວ ແລະ ຜູ້ບໍ່ມີສັນຊາດ ຢູ່ນະຄອນຫຼວງວຽງຈັນ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດສະຫຼຸບປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ແລະການປະກອບຄຳເຫັນ ລວມທັງຂໍ້ສະເໜີຈາກປະທານແນວລາວສ້າງຊາດ, ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນ, ຮອງເຈົ້າຄອງ, ຫົວໜ້າກອງບັນຊາການ ປກສ, ປະທານສະພາການຄ້າ ແລະ ອຸດສາຫະກຳ, ເຈົ້າເມືອງ 9 ເມືອງ ຂອງນະຄອນຫຼວງວຽງຈັນ.

**(ສອນສັກ ວັນວິໄຊ)**

## ຄົ້ນຄວ້າປັບປຸງ...

(ຕໍ່ຈາກໜ້າ 1)

ກົງຈັກການຈັດຕັ້ງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ເພື່ອເປັນຂໍ້ມູນແລະບ່ອນອີງໃຫ້ແກ່ການຄົ້ນຄວ້າ, ປັບປຸງກົງຈັກການຈັດຕັ້ງຂອງສະພາໃນຊຸດຕໍ່ໄປໃຫ້ເປັນລະບົບ, ມີຄວາມເປັນເອກະພາບ ແລະສອດຄ່ອງກັບກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ແນໃສ່ຮັບປະກັນໃຫ້ແກ່ການເສີມຂະຫຍາຍ ແລະຍົກສູງບົດບາດການນຳພາຂອງພັກເວົ້າລວມ ໂດຍສະເພາະການຍົກສູງບົດບາດຂອງສະພາໃຫ້ມີຄວາມແຂງແຮງ, ເລິກເຊິ່ງ, ຮອບດ້ານ ສົມຄູ່ກັບການເປັນອົງການຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ; ດ້ວຍເຫດນີ້ ຈຶ່ງຈັດກອງປະຊຸມເພື່ອຄົ້ນຄວ້າ, ປຶກສາຫາລື ແລະ ສ້າງຄວາມເປັນເອກະພາບຮ່ວມກັນ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

ກອງປະຊຸມໄດ້ຮັບຟັງບົດລາຍງານຕີລາຄາສະພາບກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຊຸດປັດຈຸບັນ ແລະ ການປັບປຸງໃນຕໍ່ໜ້າ ຈາກທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານ ສສຊ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາປະກອບຄຳເຫັນຕໍ່ແຕ່ລະບັນຫາຕາມເນື້ອໃນ, ປຶກສາຫາລື, ແລກປ່ຽນແລະສ້າງຄວາມເປັນເອກະພາບຮ່ວມກັນຢ່າງເລິກເຊິ່ງ, ມີຈຸດສຸມ ເພື່ອເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບນຳໄປຄົ້ນຄວ້າ, ເປັນບ່ອນອີງ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີຄວາມຄົບຖ້ວນ, ເໝາະສົມ ແລະ ຮັບປະກັນໃຫ້ການຈັດຕັ້ງປະຕິບັດໃນຕໍ່ໜ້າມີຄຸນນະພາບສູງຂຶ້ນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ກຸກກິກ ບຸດດາໄຊ)**

## ໄຊຍະບູລີ...

(ຕໍ່ຈາກໜ້າ 1)

ຢູ່ທົ່ວແຂວງໄຊຍະບູລີ; ການຜັນຂະຫຍາຍລັດຖະທຳມະນູນເປັນກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ; ຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນໃນໄລຍະຜ່ານມາຢູ່ແຂວງໄຊຍະບູລີ ທັງເປັນການເກັບກຳສັງລວມຄວາມເຫັນ, ຂໍ້ສະເໜີຕ່າງໆ ໃນການປະຕິບັດ ແລະ ການປັບປຸງລັດຖະທຳມະນູນ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນວ່າ: ເພື່ອເຮັດໃຫ້ການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນຢູ່ແຂວງໄຊຍະບູລີ ໄດ້ຮັບໝາກຮັບຜົນ ແລະ ແທດເໝາະກັບສະພາບການຕົວຈິງຂອງທ້ອງຖິ່ນ, ຂໍໃຫ້ບັນດາທ່ານລົງເລິກຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນ ໂດຍຕິດພັນກັບການປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງບັນດາຂະແໜງການ, ອົງການຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຮາກຖານເປັນຕົ້ນການສ້າງຄວາມຮັບຮູ້, ເຂົ້າໃຈທີ່ຖືກຕ້ອງຕໍ່ລັດຖະທຳມະນູນ ແລະ ກົດໝາຍ, ການສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຖັນແຖວພະນັກງານ-ລັດຖະກອນ, ສະມາຊິກພັກ, ນັກຮຽນຮູ້ປັນຍາຊົນ, ນັກທຸລະກິດ ແລະ ປະຊາຊົນບັນດາເຜົ່າຢູ່ພາຍໃນແຂວງ. ພ້ອມກັນນີ້, ກໍໃຫ້ສະເໜີຄຳຄິດຄຳເຫັນຕໍ່ການປັບປຸງລັດຖະທຳມະນູນ ໂດຍສະເພາະເນື້ອໃນໝວດວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງຂັ້ນແຂວງ, ຂັ້ນເມືອງ, ຂັ້ນຕາແສງ ແລະ ຂັ້ນບ້ານ; ການປະຕິບັດສິດ ແລະ ພັນທະຂອງພົນລະເມືອງລາວ, ຊາວຕ່າງດ້າວ ແລະ ຄົນບໍ່ມີສັນຊາດຢູ່ແຂວງໄຊຍະບູລີ.

ໃນກອງປະຊຸມ, ໄດ້ຮັບຟັງການສະເໜີບົດປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບປີ 2015 ຈາກທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເຊິ່ງມີເນື້ອໃນສຳຄັນບາງຕອນວ່າ: ການປັບປຸງລັດຖະທຳມະນູນຄັ້ງນີ້ ຈະສຸມໃສ່ຄົ້ນຄວ້າ, ປັບປຸງເນື້ອໃນໃຫຍ່ທີ່ສຳຄັນຈຳນວນໜຶ່ງ ຫາກບໍ່ແມ່ນປັບປຸງໝົດສະບັບ ເຊັ່ນ: 1) ການກຳນົດບົດບາດນຳພາຂອງພັກ; 2) ຈຸດໝາຍສັງຄົມນິຍົມ; 3) ການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ; 4) ການກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງບັນດາອົງການອຳນາດແຫ່ງລັດຂັ້ນສູນກາງ; 5) ການກຳນົດການແບ່ງຂັ້ນການປົກຄອງທ້ອງຖິ່ນ ເປັນຕົ້ນຂັ້ນຕາແສງ ລວມທັງການກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ສາຍພົວພັນສາຍຕັ້ງ ແລະ ສາຍຂວາງ ຂອງອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ; 6) ການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງກັບແຂວງ-ນະຄອນຫຼວງ, ລະຫວ່າງແຂວງ-ນະຄອນຫຼວງ ກັບຂັ້ນເມືອງ-ນະຄອນ, ຂັ້ນຕາແສງ ແລະ ຂັ້ນບ້ານ. ນອກຈາກເນື້ອໃນໃຫຍ່ດັ່ງກ່າວນີ້ແລ້ວ ອາດຈະຄົ້ນຄວ້າ, ປັບປຸງບາງເນື້ອໃນຍ່ອຍທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

ຈາກນັ້ນ, ຕົວແທນຈາກພາກສ່ວນຕ່າງໆ ແລະ ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ປະກອບຄຳເຫັນຢ່າງກົງໄປກົງມາ ລວມທັງຂໍ້ສະເໜີຕ່າງໆຕໍ່ກັບການປັບປຸງເນື້ອໃນລັດຖະທຳມະນູນ.

**(ກົງທະນູຄຳ ພິພັດເສລີ)**

# ຍົກສູງວຽກງານບໍລິຫານອົງກອນ ແລະ ບຸກຄະລາກອນໃຫ້ແກ່ພະນັກງານກົມຈັດຕັ້ງ

(ສພຊ) - ກອງປະຊຸມເຝິກອົບຮົມວຽກງານການບໍລິຫານອົງກອນ ແລະ ບຸກຄະລາກອນ ໃຫ້ແກ່ພະນັກງານກົມຈັດຕັ້ງ-ພະນັກງານ, ຄະນະເລຂາທິການສະພາແຫ່ງຊາດ (ຄລສ) ໄດ້ຈັດຂຶ້ນເມື່ອວັນທີ 19 ກໍລະກົດຜ່ານມາທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ແສງແກ້ວ ວົງນະລາດ ຫົວໜ້າກົມຈັດຕັ້ງ-ພະນັກງານເຊິ່ງນັກເຝິກອົບຮົມຈະໄດ້ຮັບຟັງການສະເໜີຫຼັກສູດການບໍລິຫານອົງກອນ 10 ບົດ ແລະ ຫຼັກສູດການບໍລິຫານບຸກຄະລາກອນ 10 ບົດ ຈາກບັນດາອາຈານທີ່ມີຄວາມຊ່ຽວຊານທາງດ້ານການບໍລິຫານອົງກອນ ແລະ ບຸຄະລາກອນ ຂອງໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ແລະກະຊວງພາຍໃນ.



ທັງນີ້, ກໍເພື່ອຍົກສູງບົດບາດ, ໜ້າທີ່ຮັບຜິດຊອບ, ຄວາມຮູ້ ແລະ ຄວາມສາມາດ ໃຫ້ແກ່ພະນັກງານ-ລັດຖະກອນຂອງກົມຈັດຕັ້ງ-ພະນັກງານ ແນໃສ່ປັບປຸງຄຸນນະພາບການເຄື່ອນໄຫວວຽກງານ ໂດຍສະເພາະການເປັນເສນາທິການໃຫ້ແກ່ ຄລສ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນເພີ່ມຂຶ້ນ, ຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງແລະສອດຄ່ອງຕາມລະບຽບຫຼັກການ; ເພື່ອຍົກສູງຄວາມຮູ້ ແລະ ຮັດແໜ້ນຄວາມເຂົ້າໃຈວຽກງານການບໍລິຫານອົງກອນແລະການບໍລິຫານບຸກຄະລາກອນເຊິ່ງກວມເອົາບັນດາຫຼັກການຂອງການນຳພາ, ການເຮັດວຽກເປັນທີມ, ການວາງແຜນຍຸດທະສາດ, ການສັນຫາບຸຄະລາກອນ, ການອອກແບບເຝິກອົບຮົມ ທັງເປັນການຖອດຖອນບົດ ຮຽນ ແລະ ສົນທະນາແລກປ່ຽນຄວາມຄິດເຫັນໃນຂະບວນການເຄື່ອນໄຫວວຽກງານຕົວຈິງສົມທຽບກັບທິດສະດີ.

ທ່ານ ແສງແກ້ວ ວົງນະລາດ ມີຄຳເຫັນກ່າວເປີດກອງປະຊຸມວ່າ: ການບໍລິຫານອົງກອນ ແລະບຸກຄະລາກອນ ຖືເປັນວຽກງານທີ່ສຳຄັນໃນການເຄື່ອນໄຫວວຽກງານຕ່າງໆໃຫ້ເກີດຜົນສຳເລັດ ໂດຍສະເພາະບຸຄະລາກອນທີ່ເປັນຜູ້ຕັດສິນສຳຄັນທີ່ສຸດໃນການຂັບເຄື່ອນວຽກງານຂອງອົງກອນ, ໝາຍຄວາມວ່າບຸກຄະລາກອນທີ່ມີຄຸນນະພາບ ຈະສົ່ງຜົນໃຫ້ການເຄື່ອນໄຫວວຽກງານມີຜົນສຳເລັດສູງ ແລະສາມາດພັດທະນາອົງກອນໄປພ້ອມໆກັນໄດ້; ສະນັ້ນ, ການບໍລິຫານອົງກອນ ແລະ ບຸກຄະລາກອນ ຈຶ່ງເປັນກົນລະຍຸດ ແລະ ຂະບວນການໃນການພັດທະນາອົງກອນໃຫ້ເກີດມີການປ່ຽນແປງໄປໃນທາງທີ່ດີຂຶ້ນ, ສ້າງຄວາມເຂັ້ມແຂງຢ່າງເປັນລະບົບ ແລະ ເປັນຮູບປະທຳຫຼາຍຂຶ້ນ. ທ່ານຍັງໄດ້ຮຽກຮ້ອງບັນດານັກເຝິກອົບຮົມ ຈົ່ງເອົາໃຈໃສ່ຕິດຕາມຮັບຟັງການສະເໜີ, ຄົ້ນຄວ້າ, ແລກປ່ຽນຄຳເຫັນຕໍ່ເນື້ອໃນເອກະສານຕ່າງໆທີ່ວິທະຍາກອນນຳມາສະເໜີ ເພື່ອເປັນບົດຮຽນໃຫ້ແກ່ການແກ້ໄຂບັນຫາໃນຕໍ່ໜ້າ ໂດຍສະເພາະໃນໄລຍະທ້າຍສະໄໝຂອງສະພາແຫ່ງຊາດຊຸດທີ IX ກົມຈັດຕັ້ງ-ພະນັກງານ ກໍຈະເປັນເສນາທິການໃຫ້ແກ່ຄະນະພັກເວົ້າລວມ, ເວົ້າສະເພາະກໍຄືຄະນະເລຂາທິການສະພາແຫ່ງຊາດໃນການຄົ້ນຄວ້າປັບປຸງກົງຈັກເສນາທິການຂອງຄະນະປະຈຳ, ກຳມາທິການ ເພື່ອສອດຄ່ອງກັບໜ້າທີ່ການເມືອງໄລຍະໃໝ່.

ກອງປະຊຸມດຳເນີນຈົນເຖິງວັນທີ 23 ກໍລະກົດ 2024 ຈຶ່ງສຳເລັດ ໂດຍໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກໂຄງການ STEPs ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ອານິຕາ ມ່ວນສະຫວັດ)**

# ເຊື່ອມຊຶມເອກະສານກອງປະຊຸມໃຫຍ່ 3 ຂັ້ນ ແລະ ປາຖະກະຖາວັນສ້າງຕັ້ງສະຫະພັນແມ່ຍິງລາວ




(ສພຊ) - ໂດຍປະຕິບັດ ຕາມຄຳແນະນຳຂອງຄະນະພັກແຂວງບໍ່ແກ້ວ ສະບັບເລກທີ 375/ຄປພຂ, ລົງວັນທີ 14 ພຶດສະພາ 2024 ກ່ຽວກັບການຈັດຕັ້ງເຊື່ອມຊຶມ, ສຶກສາອົບຮົມການເມືອງ-ແນວຄິດ ສຳລັບສະມາຊິກພັກ, ພະນັກງານຫຼັກແຫຼ່ງ, ພະນັກງານຮາກຖານ ແລະ ປະຊາຊົນ ເພື່ອດຳເນີນກອງປະຊຸມ 3 ຂັ້ນຂອງພັກ ດັ່ງນັ້ນ, ໃນວັນທີ 17 ກໍລະກົດ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ຈັດຕັ້ງພິທີເຊື່ອມຊຶມເອກະສານກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ແລະ ປາຖະກະຖາວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 69 ປີ (20 ກໍລະກົດ 1995-20 ກໍລະກົດ 2024) ພາຍໃຕ້ການຂຶ້ນເຊື່ອມຊຶມ ແລະ ປາຖະກະຖາຂອງບັນດາຄະນະປະຈຳສະພາປະຊາຊົນແຂວງ.

ພາຍໃນສະພາປະຊາຊົນແຂວງ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ຄວາມໝາຍ, ຄວາມສຳຄັນຂອງກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ແລະ ຂອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ທັງເປັນການເຝິກຝົນຫຼໍ່ຫຼອມຕົນເອງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດຂອງພະນັກງານ, ສະມາຊິກພັກແລະເພື່ອສ້າງຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງ ແລະ ການກະກຽມຄວາມພ້ອມຢ່າງຮອບດ້ານໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ 3 ຊັ້ນຂອງພັກໃຫ້ມີຜົນສຳເລັດຢ່າງສະຫງ່າງາມ.

# ສພຂ ອຸດົມໄຊ ຮັບຮອງບັນຫາສຳຄັນຂອງແຂວງ




(ສພຊ) - ໃນລະຫວ່າງວັນທີ 18-19 ກໍລະກົດ 2024 ຢູ່ທີ່ສະໂມສອນແຂວງອຸດົມໄຊ ໄດ້ມີກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ຊຸດທີ II ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານ ສພຂ, ເຂົ້າຮ່ວມໂດຍທ່ານ ບຸນຄົງ ຫຼ້າຈຽມພອນ ກຳມະການສຳຮອງສູນກາງພັກ, ເຈົ້າແຂວງອຸດົມໄຊ, ມີສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4, ສສຂ, ຄະນະປະຈຳພັກແຂວງ, ອະດີດສະມາຊິກສະພາແຫ່ງຊາດເຂດເລືອກຕັ້ງທີ 4, ອະດີດການນຳແຂວງ, ພະແນກການ, ອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, 3 ອົງການຈັດຕັ້ງ, ສອງກອງບັນຊາການ, ບັນດາທະນາຄານ, ລັດວິສາຫະກິດ, ບໍລິສັດ ແລະອົງການປົກຄອງບ້ານເທດສະບານແຂວງ.

ກອງປະຊຸມໃນຄັ້ງນີ້, ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ຄື: ພິຈາລະນາຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024 ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ພິຈາລະນາ ຮັບຮອງເອົາການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີແລະແຜນການ 6 ເດືອນທ້າຍປີ 2024; ພິຈາລະນາຮັບຮອງເອົາການຈັດຕັ້ງປະຕິບັດບັນດາຄາດໝາຍພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກປີ 2021 ເຖິງປັດຈຸບັນ ແລະ ແຜນການໃນຕໍ່ໜ້າ ຢູ່ແຂວງອຸດົມໄຊ; ຮັບຮອງເອົາການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024 ຂອງ ສພຂ; ຮັບຟັງບົດລາຍງານການຈັດຕັ້ງປະຕິບັດການຂຸດຄົ້ນແຮ່ທາດ ຢູ່ແຂວງອຸດົມໄຊ ແຕ່ປີ 2021 ເຖິງປັດຈຸບັນ ແລະ ແຜນການໃນຕໍ່ໜ້າ ແລະ ພິຈາລະນາຮັບຮອງເອົາການສ້າງນິຕິກຳໃຕ່ກົດໝາຍ (ຂໍ້ຕົກລົງເຈົ້າແຂວງ) ຈຳນວນ 3 ສະບັບສ້າງໃໝ່ ຄື: ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳແຂວງອຸດົມໄຊ; ຂໍ້ຕົກລົງເຈົ້າແຂວງວ່າດ້ວຍການດຳເນີນທຸລະກິດບໍລິການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານຢູ່ແຂວງອຸດົມໄຊແລະຂໍ້ຕົກລົງເຈົ້າແຂວງວ່າດ້ວຍການຄຸ້ມຄອງ ການບໍລິການ, ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າຢູ່ແຂວອຸດົມໄຊ.

ກອງປະຊຸມຄັ້ງນີ້, ຍັງໄດ້ຮັບຟັງການລາຍງານ-ການຊີ້ແຈງ ແລະ ໃຫ້ຄວາມກະຈ່າງແຈ້ງຕໍ່ຄຳຊັກຖາມຂອງບັນດາທ່ານ ສສຂ ຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ວຽກງານອື່ນໆທີ່ຕິດພັນການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ.

ຕະຫຼອດໄລຍະດຳເນີນກອງປະຊຸມ 2 ວັນ, ນັ້ນມີໂທລະສັບສາຍດ່ວນເຂົ້າມາທັງ 8 ສາຍ; ມີ 14 ບັນຫາ; ບັນດາຄຳສະເໜີເຫຼົ່ານັ້ນຄະນະປະຈຳສພຂ ຈະຈັດກອງປະຊຸມຄົ້ນຄວ້າຄວ້າ, ປຶກສາຫາລື ແລ້ວເຮັດສະໂໜດນຳສົ່ງໃຫ້ອົງການທີ່ກ່ຽວຂ້ອງເພື່ອຄົ້ນຄວ້າ, ພິຈາລະນາ ພ້ອມທັງໃຫ້ຕອບຄຳຂັດຂ້ອງໝອງໃຈຕໍ່ປະຊາຊົນກ່ຽວກັບບັນຫາດັ່ງກ່າວຕາມພາລະບົດບາດ.

**(ສີແຫວງ ສີບຸນເຮືອງ)**

# ຍົກສູງຄຸນນະພາບເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 7 ສພຂ ສະຫວັນນະເຂດ



(ສພຊ) - ເພື່ອເປັນການກະກຽມວຽກງານຮອບດ້ານໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ II ທີ່ໄຂຂຶ້ນໃນວັນທີ 24-26 ກໍລະກົດ 2024, ເມື່ອວັນທີ 16-17 ກໍລະກົດ 2024 ສພຂ ສະຫວັນນະເຂດ ໄດ້ຈັດກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນຂຶ້ນ ທີ່ຫ້ອງປະຊຸມປົກຄອງເມືອງພະລານໄຊ, ພາຍໃຕ້ການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານຄະນະປະຈຳ ສພຂ, ມີທ່ານຮອງເຈົ້າແຂວງໆສະຫວັນນະເຂດ, ບັນດາທ່ານກຳມະການຄະນະປະຈຳ ສພຂ, ພະແນກການທີ່ກ່ຽວຂ້ອງ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 14 ເມືອງ, 1 ນະຄອນ, ຮອງເລຂາທິການ ສພຂ, ຮອງເຈົ້າເມືອງພະລານໄຊ ແລະ ພະນັກງານ-ລັດຖະກອນ ພາຍໃນ ສພຂ ຈຳນວນໜຶ່ງເຂົ້າຮ່ວມລວມທັງໝົດ 91 ທ່ານ ຍິງ 22 ທ່ານ.

ກອງປະຊຸມຄັ້ງນີ້ເປັນຄັ້ງທີ 2 ທີ່ຈັດຂຶ້ນ ເພື່ອຄົ້ນຄວ້າບັນດາເນື້ອໃນສຳຄັນ ແລະ ໃຫ້ລະອຽດຈະແຈ້ງໂດຍສະເພາະການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນກ່ອນທີ່ຈະນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນຂອງ ສພຂ ເຊິ່ງໄດ້ສຸມໃສ່ຮັບຟັງການລາຍງານໂດຍສັງເຂບ ແລະ ສົນທະນາແລກປ່ຽນຄຳຄິດເຫັນໃສ່ບາງເນື້ອໃນບົດລາຍງານອົງການປົກຄອງແຂວງ; ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງ 6 ເດືອນຕົ້ນປີ ແລະທິດທາງແຜນການ 06 ເດືອນທ້າຍປີ 2024; ບົດລາຍງານຂອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ທ້າຍປີ 2024; ບົດລາຍງານຂອງຫົວໜ້າພະແນກການເງິນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂັ້ນແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ທ້າຍປີ 2024; ບົດລາຍງານຂອງຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ແຂວງ ກ່ຽວກັບປະສິດທິພາບໃນການຈັດຕັ້ງປະຕິບັດໂຄງການລົງທຶນແຮ່ທາດໃນໄລຍະຜ່ານມາ ແລະກຳນົດແຜນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າຂອງແຂວງ; ບົດລາຍງານຂອງຫົວໜ້າພະແນກສິກຳ ແລະ ປ່າໄມ້ແຂວງ ກ່ຽວກັບຜົນການຈັດຕັ້ງປະຕິບັດບັນດາຄາດໝາຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນໄລຍະຜ່ານມາແລະທິດທາງແຜນການໃນຕໍ່ໜ້າ; ບົດລາຍງານຂອງທ່ານຫົວໜ້າທະນາຄານແຫ່ງ ສປປ ລາວ ປະຈຳພາກກາງ ສາຂາແຂວງຫວັນນະເຂດ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະທິດທາງແຜນການ 6 ທ້າຍປີ 2024; ນອກຈາກນີ້, ຍັງໄດ້ຮັບຟັງບົດສະເໜີຂອງບັນດາພະແນກການກ່ຽວກັບແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຈຳນວນ 02 ສະບັບ ຄື: ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງສະຫວັນນະເຂດ ວ່າດ້ວຍການຄຸ້ມຄອງກອງທຶນໄພພິບັດແຂວງສະຫວັນນະເຂດ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ (ສ້າງໃໝ່) ແລະຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງສະຫວັນນະເຂດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳຂອງແຂວງສະຫວັນນະເຂດ (ສ້າງໃໝ່) ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປີ 2015.

ພ້ອມດຽວກັນນີ້, ກໍໄດ້ສະເໜີໃຫ້ຜູ້ແທນກອງປະຊຸມຄົ້ນຄວ້າ ແລກປ່ຽນຄຳຄິດຄຳເຫັນ, ຢ່າງມີຈຸດສຸມສອດຄ່ອງກັບສະພາບຕົວຈິງ, ເຊິ່ງໃນໄລຍະກອງປະຊຸມມີຜູ້ແທນປະກອບຄຳເຫັນທັງໝົດ 13 ເທື່ອທ່ານ ຍິງ 3 ເທື່ອທ່ານ, ກອງປະຊຸມຄັ້ງນີ້ເຫັນໄດ້ເຖິງຄວາມເອົາໃຈໃສ່ ແລະ ເປັນເຈົ້າການຂອງບັນທ່ານສສຊ ແລະ ສສຂ, ບັນດາທ່ານຜູ້ແທນກອງປະຊຸມ ໃນການຄົ້ນຄວ້າປະກອບຄຳເຫັນຕໍ່ບັນດາເນື້ອໃນຮ່າງກົດໝາຍ ດ້ວຍລັກສະນະສ້າງສັນ, ຢ່າງຖີ່ຖ້ວນ ແລະເລິກເຊິ່ງ ດ້ວຍຄວາມຮັບຜິດຊອບສູງ ຈຶ່ງເຮັດໃຫ້ກອງປະຊຸມ ໄດ້ສິ້ນສຸດລົງດ້ວຍຜົນສຳເລັດຢ່າງຈົບງາມ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນດ້ານງົບປະມານ ຈາກງົບປະມານສົມທົບຂອງ ສພຂ ບ້ວງເງິນບຳເນັດເກີນແຜນປີ 2023 ມານຳໃຊ້ປີ 2024 ແລະ ງົບປະມານຂອງໂຄງການສ້າງຄວາມເຂັ້ມແຂງ ໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS);




# ດື່ມເຫຼົ້າຍາມບຸນເຂົ້າພັນສາ

# ດົ້ນກົບເມກ

ບຸນເຂົ້າພັນສາ ໝາຍເຖິງວັນທີ່ພິກຂຸສົງຢູ່ຈໍາພັນສາ 3 ເດືອນ ໃນລະດູຝົນ ເລີ່ມຕົ້ນແຮມ 1 ຄໍ່າ ເດືອນ 8 ຈົນຮອດວັນຂຶ້ນ 15 ຄໍ່າເດືອນ 11, ການຢູ່ຈໍາພັນສາພະສົງຈະບໍ່ເດີນທາງໄປນອນຄ້າງຄືນທີ່ອື່ນ ເວັ້ນໄວ້ແຕ່ມີເຫດຈໍາເປັນເຊິ່ງຕ້ອງກັບມາພາຍໃນ 7 ວັນ, ບຸນເຂົ້າພັນສາ ນອກຈາກພິທີຮັກສາສິນຖວາຍທານແລ້ວ ຍັງໄດ້ຖວາຍຜ້າອາບນໍ້າຝົນ ທີ່ເປັນຜ້າຂາວຜືນໃຫຍ່ພຽງພໍນຸ່ງອາບນໍ້າຝົນໄດ້ ຜູ້ຂຽນມັກເຫັນເຂົາຂາຍມີແຕ່ຜືນນ້ອຍນຸ່ງອາບນໍ້າໃຊ້ວຽກກໍບໍ່ໄດ້ ຜູ້ຖວາຍທານຄວນຄິດເລືອກໃຫ້ເໝາະສົມ ຖ້າຈະຖວາຍແດ່ສົງ.

ບຸນເຂົ້າພັນສາ ເປັນບຸນປະເພນີຂອງພຸດທະສາສະນິກະຊົນລາວທີ່ສືບທອດປະຕິບັດກັນມາດົນນານເລີ່ມແຕ່ສາສະໜາພຸດເຂົ້າມາລາວ, ໄລຍະເຂົ້າພັນສາ ຊາວພຸດມັກນິຍົມງົດເວັ້ນບໍ່ດື່ມເຫຼົ້າ ເຊິ່ງຂຶ້ນກັບຄວາມພໍໃຈຂອງແຕ່ລະຄົນທີ່ຕັ້ງເຈດຕະນາເດັດຂາດ ແຕ່ຄວາມຈິງ ໄລຍະເຂົ້າພັນສາກໍມີຫຼັກທໍາໃຫ້ຊາວພຸດໄດ້ຮຽນຮູ້ສຶກສານໍາມາປະຕິບັດ 3 ປະການທີ່ເອີ້ນວ່າ: ວິຣັດ ແປວ່າ ການງົດເວັ້ນຈາກບາບ ແລະ ຄວາມຊົ່ວທັງປວງ ເປັນມຸງຄຸນຊີວິດຂໍ້ໜຶ່ງພາໃຫ້ຄົນເຮົາສະຫງົບສຸກປອດໄພ ແລະ ຈະເລີນຮຸ່ງເຮືອງໃນຊີວິດ ການງົດເວັ້ນຈາກການເຮັດບາບນັ້ນມີ 3 ປະການຄື: 1. ເວັ້ນຈາກອະບາຍຍະມຸກ ແລະ ຄວາມຊົ່ວຕ່າງໆ ໃຫ້ມີຄວາມຮູ້ສຶກລະອາຍ ແລະ ຢ້ານກົວຕໍ່ບາບ ເພາະໄດ້ສະມາທານສິນຄືຢຶດຖືເອົາເປັນຫຼັກການ 2. ເວັ້ນຈາກອະບາຍຍະມຸກ-ຄວາມຊົ່ວທັງປວງ ເພາະໄດ້ສະມາທານຖືສິນ 5 ຫຼື ສິນ 8 ເຊິ່ງເຮົາຕ້ອງຕັ້ງໃຈໃຫ້ໝັ້ນຄົງບໍ່ຄອນແຄນ 3. ເວັ້ນຈາກອະບາຍຍະມຸກ-ຄວາມເຊື່ອທັງປວງ ໄດ້ຢ່າງເດັດຂາດ ທັງໃນເວລາເຂົ້າພັນສາ 3 ເດືອນ ແລະ ຕະຫຼອດຊີວິດເພາະເປັນຄຸນນະທໍາຂອງຄົນຜູ້ຕ້ອງການຄວາມຈະເລີນຮຸ່ງເຮືອງແດ່ຊີວິດຂອງຕົນ ແລະ ຄອບຄົວ, ຫຼັກທໍາມະ 3 ປະການນີ້ເອີ້ນວ່າ ວິຣັດ ຄືເວັ້ນຈາກອະບາຍຍະມຸກ ແລະ ຄວາມຊົ່ວທັງປວງ.

ຂໍ້ໜ້າຄິດ-ໜ້າສັງເກດ ສໍາລັບມື້ບຸນເຂົ້າພັນສາຢູ່ບ້ານເຮົາ ເປັນວັນສິນຫຼາຍບ່ອນພັກວຽກໄປເຮັດບຸນຖວາຍທານຢູ່ວັດ ເມື່ອເລີກບຸນຢູ່ວັດ ກໍກັບມາຊຸມເຫຼົ້າ ເບຍຢູ່ເຮືອນ ຫຼື ຊຸມກັນຢູ່ບ່ອນທ່ອງທ່ຽວຕ່າງໆ ທັງໆທີ່ຮີດຄອງບໍ່ໄດ້ບອກ ສາດສະໜາກໍບໍ່ໄດ້ສອນ ແທນທີ່ຈະຮັກສາສິນ, ສ້າງຄວາມດີ, ບໍລິຈາກທານ ແຕ່ເປັນຫຍັງ ກະແສຄ່ານິຍົມ ຄົນໃນສັງຄົມພາກັນຊຸມແຊວເຫຼົ້າເບຍມື້ເຂົ້າພັນສາ ຫຼື ທ່າອຽງກະແສບໍລິໂພກນິຍົມ-ວັດຖຸນິຍົມ ມີຖົງໜັກກໍສະບາຍຈ່າຍ ນີ້ບໍ່ແມ່ນສາສະໜາໃຫ້ເມົາ ຄົນຫາກພາເມົາເອງເນີ້ !.






# ວິທີເຮັດວຽກ

**ພາກທີ 6**
**ວິທີນໍາ**

ໃນບ່ອນທີ່ວຽກການບໍ່ແລ່ນສະດວກນັ້ນ ມັນມັກເປັນຍ້ອນບໍ່ມີກຸ່ມການນໍາທີ່ປະສານງານໃກ້ຊິດກັບປະຊາຊົນ, ຍົກຕົວຢ່າງກໍຄື: ໂຮງຮຽນຫຼັງໜຶ່ງຖ້າບໍ່ມີນາຍຄູ, ຂ້າລາຊະການ ແລະ ນັກຮຽນກຸ່ມໜຶ່ງທີ່ຫ້າວຫັນແຕ່ 10 ຄົນໄປຫາຫຼາຍສິບຄົນມາສາມັກຄີກັນເປັນກຸ່ມແກ່ນສານນໍາພາແລ້ວ ວຽກການໃນໂຮງຮຽນນັ້ນເດັດຂາດຕ້ອງເລະເຊີະ. ເພາະສະນັ້ນ ບໍ່ວ່າສໍານັກງານໃດ ບໍ່ວ່າກອງທະຫານໃດ ກໍຕ້ອງເລືອກເອົາຄົນຫ້າວຫັນບໍລິສຸດ ມີຄວາມສາມາດຮັກສາລະບຽບວິໄນ ສາມັກຄີກັນເຂົ້າເປັນແກ່ນສານນໍາພາ.

ການນໍາພາໃນວຽກງານຕົວຈິງຂອງພັກ ຕ້ອງແມ່ນອອກມາຈາກປະຊາຊົນແລ້ວກັບຄືນໄປຫາປະຊາຊົນ, ໝາຍຄວາມວ່າ ລວບລວມເອົາທຸກຄໍາເຫັນທີ່ຊະຊາຍ, ປົກຍ່ອຍຂອງປະຊາຊົນມາຈໍາແນກ, ຄົ້ນຄວ້າ, ສັບຊ້ອນໃຫ້ເປັນຄໍາເຫັນທີ່ມີສາຍໄຍຕິດຕໍ່ກັນ, ແລ້ວເອົາໄປອະທິບາຍຊີ້ແຈງໃຫ້ປະຊາຊົນ ແລະ ເຮັດໃຫ້ປະຊາຊົນຍຶດໝັ້ນ ແລະ ປະຕິບັດຄໍາເຫັນນັ້ນ. ພ້ອມກັນນັ້ນອາໄສເວລາປະຊາຊົນປະຕິບັດຢູ່ນັ້ນ ພວກເຮົາກໍກວດກາ ນັ້ນຖືກ ຫຼື ບໍ່ ແລ້ວລວບລວມຄືນເບິ່ງອີກໃຫ້ຮູ້ວ່າຄໍາເຫັນອັນນັ້ນຖືກຂອງປະຊາຊົນຄືນມາອີກ, ຂະຫຍາຍຂໍ້ດີແກ້ໄຂຂໍ້ບົກພ່ອງອະທິບາຍຊີ້ແຈງອີກ ເຮັດໃຫ້ປະຊາຊົນຍຶດໝັ້ນ ແລະ ປະຕິບັດຕໍ່ໄປອີກ ມີແຕ່ເຮັດແນວນັ້ນ ເທື່ອຫຼັງຄົງຈະຖືກຕ້ອງກວ່າມ່ວນຊື່ນ ເບີກບານກວ່າ ແລະ ຄົບຖ້ວນກວ່າເທື່ອກ່ອນ, ນັ້ນແມ່ນການນໍາທີ່ດີທີ່ສຸດ.

ອ່ານຕໍ່ສະບັບໜ້າ...




# ທົດແທນ- ຕອບແທນ

ທົດແທນ ແລະ ຕອບແທນ ເປັນສອງຄໍາທີ່ມີຄວາມໝາຍຄ້າຍຄື ແຕ່ບໍ່ສາມາດໃຊ້ແທນກັນໄດ້ໃນທຸກກໍລະນີ.

'ທົດແທນ' ເປັນຄໍາປະສົມປະເພດຄໍາກິລິຍາ ປະກອບດ້ວຍຄໍາວ່າ 'ທົດ' ທີ່ໝາຍເຖິງ "ແທນ" ແລະ 'ແທນ' ໝາຍເຖິງ "ເອົາຄືນໃຫ້". ເມື່ອສອງຄໍານີ້ປະສົມເຂົ້າເປັນ 'ທົດແທນ' ກໍໝາຍເຖິງ "ແທນຄືນໃຫ້ຕໍ່ຜູ້ມີຄຸນ" ເຊັ່ນ

- ພໍ່ແມ່ລ້ຽງດູພວກເຮົາຈົນໃຫຍ່ ມີໜ້າທີ່ການງານແລ້ວ ພວກເຮົາກໍຕ້ອງທົດແທນບຸນຄຸນພໍ່ແມ່.
- ລາວໄດ້ຮັບທຶນຈາກລັດຖະບານໄປຮຽນຕໍ່ ເມື່ອຈົບກັບມາ ລາວກໍຕ້ອງເຮັດວຽກທົດແທນໃຫ້ລັດຖະບານ.

ພ້ອມກັນນັ້ນ 'ທົດແທນ' ຍັງໃຊ້ໃນຄວາມໝາຍວ່າ "ຊົດໃຊ້ຄືນຕາມຈໍານວນທີ່ຕົນໄດ້ເອົາຫຼືເຮັດໃຫ້ເສຍຫາຍໄປ" ເຊັ່ນ

- ລາວຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດທີ່ລາວໄດ້ກະທໍາຂຶ້ນ.
- ທີ່ດິນຈະເຮັດໂຄງການພັດທະນາ ຕ້ອງທົດແທນຢ່າງສົມເຫດສົມຜົນກ່ອນ.
- ມື້ນີ້ ອາຈານຄາປະຊຸມດ່ວນ ເພິ່ນຈະສອນທົດແທນໃນວັນເສົາ.

'ຕອບແທນ' ເປັນຄໍາປະສົມປະເພດຄໍາກິລິຍາ ປະກອບດ້ວຍຄໍາວ່າ 'ຕອບ' ທີ່ໝາຍເຖິງ "ເຮັດແທນຄືນໃຫ້" ແລະ ແທນ ໝາຍເຖິງ "ເອົາຄືນໃຫ້"

ເມື່ອສອງຄໍານີ້ປະສົມເຂົ້າເປັນ 'ຕອບແທນ' ກໍໝາຍເຖິງ "ເຮັດອັນໃດອັນໜຶ່ງ ເພື່ອທົດແທນບຸນຄຸນແກ່ຜູ້ໄດ້ກະທໍາກ່ອນ" ເຊັ່ນ

- ລູກໃຫຍ່ຂຶ້ນມາແລ້ວຕ້ອງຕອບແທນບຸນຄຸນຂອງພໍ່ແມ່.
- ຄໍາແດງໃຫ້ການຊ່ວຍເຫຼືອຜູ້ອື່ນໂດຍບໍ່ຫວັງສິ່ງຕອບແທນ.
- ລາວໄດ້ຮັບເງິນຈໍານວນໜຶ່ງເປັນການຕອບແທນ ຈາກການທີ່ໄດ້ຊ່ວຍເຫຼືອເດັກນ້ອຍຕົກນໍ້າ.



# ຂຽນຄໍາລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ຂວ້າມທາງ | ຂວ້ຳທາງ |
| ຂວ້ຳກະໂປະ | ຂວ້າມກະໂປະ |
| ໄຂ່ໄກ່ | ໄຄ່ໄກ່ |
| ຮັກໄຄ່ | ຮັກໄຂ່ |
| ແຂ່ງຂັນ | ແຄ່ງຂັນ |
| ແຄ່ງຂາ | ແຂ່ງຂາ |
| ນົກຂໍ່ | ນົກຄໍ່ |
| ປາຄໍ່ | ປາຂໍ່ |
| ຫຍິບແສ່ວ | ຫຍິບແຊ່ວ |
| ບິນແຊ່ວ | ບິນແສ່ວ |

ລັດຖະສະພາຕ່າງປະເທດ

# ກົດໝາຍຈະລາຈອນສະບັບໃໝ່ ຂອງຫວຽດນາມ ກຳນົດໃຫ້ ຜູ້ຂັບຂີ່ມີທາດເຫຼົ້າເປັນສູນ



*ສະມາຊິກສະພານິຕິບັນຍັດ ໄດ້ຜ່ານຮ່າງກົດໝາຍວ່າດ້ວຍຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພການຈະລາຈອນທາງຖະໜົນ ໃນນີ້ລວມມີບົດບັນຍັດທີ່ຜູ້ຂັບຂີ່ບໍ່ຄວນມີທາດເຫຼົ້າຢູ່ໃນລະບົບຮ່າງກາຍຂອງພວກເຂົາ.*

ຕາມເວັບໄຊ VnExpress ລາຍງານເມື່ອທ້າຍເດືອນມິຖຸນາຜ່ານມາ, ຄະນະປະຈຳສະພາແຫ່ງຊາດ ໄດ້ຂໍຄວາມຄິດເຫັນຂອງສະມາຊິກສະພາແຫ່ງຊາດ ດ້ວຍຮູບການປະກອບຄວາມຄິດເຫັນ (ຜ່ານ App) ແລະ ພົບວ່າ ຜູ້ແທນ 293 ໃນຈຳນວນ 388 ທ່ານທີ່ປະກອບຄຳເຫັນ ເຫັນດີກັບບົດບັນຍັດທີ່ບໍ່ໃຫ້ມີທາດເຫຼົ້າໃນເລືອດ ແລະ ລົມຫາຍໃຈເຊິ່ງຂໍ້ກຳນົດດັ່ງກ່າວໄດ້ຮັບການປະຕິບັດມາເປັນເວລາຫຼາຍປີແລ້ວ, ແຕ່ປັດຈຸບັນໄດ້ກາຍເປັນກົດໝາຍເທົ່ານັ້ນ; ຜູ້ແທນ 293 ທ່ານ (ກວມເອົາ 75,52% ຂອງຈຳນວນຜູ້ແທນທີ່ໃຫ້ຄຳເຫັນ ແລະ ກວມເອົາ 60,16% ຂອງຈຳນວນຜູ້ແທນທັງໝົດໃນສະພາແຫ່ງຊາດຊຸດປັດຈຸບັນ) ຕົກລົງທີ່ຈະຫ້າມຜູ້ຂັບຂີ່ຍານພາຫະນະໃນເວລາທີ່ມີທາດເຫຼົ້າຢູ່ໃນເລືອດ ຫຼື ລົມຫາຍໃຈ, ໃນຈຳນວນນີ້ ມີ 95 ທ່ານ ສະເໜີໃຫ້ກຳນົດຂີດຈຳກັດທາດເຫຼົ້າເປັນສູນ.

ຄະນະປະຈຳສະພາແຫ່ງຊາດ ກ່າວວ່າ: ການຮັກສາລະດັບທາດເຫຼົ້າເປັນສູນ ມີຈຸດປະສົງເພື່ອປົກປ້ອງຊີວິດ, ສຸຂະພາບ ແລະ ຊັບສິນຂອງພົນລະເມືອງ, ປົກປ້ອງຊັບພະຍາກອນທາງສັງຄົມ; ມັນຈະຊ່ວຍສ້າງວັດທະນະທຳ "ບໍ່ດື່ມເຫຼົ້າແລ້ວຂັບລົດ".

ອີງຕາມກົດໝາຍສະບັບໃໝ່, ຜູ້ຂັບຂີ່ທີ່ມີທາດເຫຼົ້າໃນເລືອດແລະລົມຫາຍໃຈ ຈະຖືກປັບໃໝ 2-8 ລ້ານດົ່ງ (1 ດົ່ງ ປະມານ 0.93 ກີບ) ແລະ ຈະຖືກໂຈະໃບອະນຸຍາດຂັບຂີ່ ເປັນເວລາ 10-24 ເດືອນ, ຂຶ້ນກັບລະດັບທາດເຫຼົ້າຂອງຜູ້ຂັບຂີ່.

# ສະມາຊິກສະພານິຕິບັນຍັດຈີນ ລົງມະຕິ ຮັບຮອງກົດໝາຍ ແລະ ຕົກລົງບັນຫາສຳຄັນ



ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ຊຸດທີ XIV ທີ່ປິດລົງເມື່ອທ້າຍເດືອນມິຖຸນາຜ່ານມາ ໂດຍການເປັນປະທານຂອງທ່ານ ຈ້າວ ເລີຈີ້ (Zhao Leji) ປະທານສະພາຜູ້ແທນປະຊາຊົນທົ່ວປະເທດຈີນ, ໄດ້ມີມະຕິຮັບຮອງເອົາກົດໝາຍວ່າດ້ວຍອົງການເສດຖະກິດສ່ວນລວມໃນຊົນນະບົດ (law on rural collective economic organizations), ກົດໝາຍວ່າດ້ວຍການຕອບໂຕ້ເຫດສຸກເສີນ (ປັບປຸງ), ກົດໝາຍວ່າດ້ວຍສຸຂະພາບຊາຍແດນ ແລະ ການກັກກັນໂລກ (ປັບປຸງ), ກົດໝາຍວ່າດ້ວຍການບັນຊີ (ປັບປຸງ); ນອກຈາກນີ້, ຍັງຕົກລົງແຕ່ງຕັ້ງທ່ານ ເຫຼີຍ ໄຫເສົາ (Lei Haichao) ເປັນຜູ້ອຳນວຍການຄະນະກຳມະການສຸຂະພາບແຫ່ງຊາດ ແທນທ່ານ ໝ່າ ສຽວເຫວີຍ (Ma Xiaowei).

ກົດໝາຍວ່າດ້ວຍອົງການເສດຖະກິດສ່ວນລວມໃນຊົນນະບົດ ທີ່ຈະມີຜົນສັກສິດໃນວັນທີ 01 ພຶດສະພາ 2025, ລັດຖະບານຈະສະໜັບສະໜູນການພັດທະນາອົງການເຫຼົ່ານີ້ ໂດຍຜ່ານນະໂຍບາຍງົບປະມານ, ພາສີ, ການເງິນ, ທີ່ດິນ, ຄວາມສາມາດພິເສດ ແລະ ອຸດສາຫະກຳເພື່ອສ້າງຄວາມເຂັ້ມແຂງເສດຖະກິດສ່ວນລວມໃນຊົນນະບົດແບບໃໝ່.

ກົດໝາຍວ່າດ້ວຍການຕອບໂຕ້ເຫດສຸກເສີນ ຈະເພີ່ມຄວາມເຂັ້ມງວດໃນການຮັບມືກັບອຸບັດເຫດ ແລະ ໄພພິບັດ ລວມທັງກຳນົດບົດລົງໂທດຜູ້ໃດກໍຕາມ "ທີ່ບໍ່ສາມາດປະຕິບັດໄດ້ດີຢ່າງພຽງພໍ ຫຼື ລົ້ມເຫຼວ" ເພື່ອກະກຽມ ຫຼື ຕອບສະໜອງຕໍ່ສະຖານະການສຸກເສີນ ຫຼື ໄພພິບັດ ຈະຖືກປັບໃໝເປັນເງິນ 1 ລ້ານຢວນ (ປະມານ 3,300 ລ້ານກີບ) ເພີ່ມຂຶ້ນຈາກກົດໝາຍສະບັບປັດຈຸບັນ ທີ່ໄດ້ປະກາດໃຊ້ໃນປີ 2007 ອີກ 5 ເທົ່າ, ເຊິ່ງກົດໝາຍສະບັບປັບປຸງໃໝ່ນີ້ຈະມີຜົນສັກສິດໃນວັນທີ 01 ພະຈິກ 2024.

ກົດໝາຍວ່າດ້ວຍສຸຂະພາບຊາຍແດນ ແລະ ການກັກກັນໂລກ ໂດຍໄດ້ເພີ່ມມາດຕະການເພື່ອປັບປຸງການກັກກັນດ້ານສຸຂະພາບຕາມເຂດຊາຍແດນຂອງປະເທດແລະປ້ອງກັນການແຜ່ລະບາດຂອງພະຍາດຕິດຕໍ່ຂ້າມຊາຍແດນ.

ກົດໝາຍວ່າດ້ວຍການບັນຊີເຊິ່ງຈະເພີ່ມທະວີການຕິດຕາມກວດກາ, ເພີ່ມໂທດຕໍ່ການລະເມີດ, ຍົກສູງຄຸນນະພາບຂອງຂໍ້ມູນການບັນຊີ.

**ແຫຼ່ງຂ່າວ: ຊິນຮວາ**

# ສານສູງສຸດຍີ່ປຸ່ນ ຕັດສິນວ່າກົດໝາຍ ບັງຄັບເຮັດໝັນ ຂັດຕໍ່ລັດຖະທຳມະນູນ




ສຳນັກຂ່າວ AFP ລາຍງານເມື່ອຕົ້ນເດືອນກໍລະກົດຜ່ານມາວ່າ, ສານສູງສຸດຂອງຍີ່ປຸ່ນ ໄດ້ຕັດສິນໃຫ້ກົດໝາຍວ່າດ້ວຍການປັບປຸງຄຸນນະພາບທາງພັນທຸກຳ (eugenics) ທີ່ຍົກເລີກໃຊ້ແລ້ວ ເຊິ່ງບັງຄັບໃຫ້ປະຊາຊົນຫຼາຍພັນຄົນຕ້ອງເຮັດໝັນ ລະຫວ່າງປີ 1948-1996, ຂັດຕໍ່ລັດຖະທຳມະນູນຂອງປະເທດ ແລະ ເປີດໂອກາດໃຫ້ຜູ້ປະສົບເຄາະຮ້າຍ ສາມາດຮຽກຮ້ອງຄ່າຊົດເຊີຍຫຼັງຈາກໄດ້ຕໍ່ສູ້ຄະດີຍາວນານຫຼາຍປີ; ສານສູງສຸດຍີ່ປຸ່ນທີ່ນະຄອນຫຼວງໂຕກຽວ ຍັງລະບຸວ່າ: ການທີ່ລັດຫຼີກລ່ຽງຄວາມຮັບຜິດຊອບໃນການຈ່າຍຄ່າຊົດເຊີຍຄວາມເສຍຫາຍ ຖືເປັນເລື່ອງທີ່ບໍ່ຍຸຕິທຳທີ່ສຸດ ແລະ ເປັນສິ່ງທີ່ຍອມຮັບບໍ່ໄດ້ຢ່າງຍິ່ງ.

ລັດຖະບານຍີ່ປຸ່ນຍອມຮັບວ່າ ປະຊາຊົນປະມານ 16,500 ຄົນ ໄດ້ຖືກບັງຄັບໃຫ້ເຮັດໝັນພາຍໃຕ້ກົດໝາຍດັ່ງກ່າວ ເຊິ່ງມີຈຸດປະສົງເພື່ອປ້ອງກັນບໍ່ໃຫ້ປະຊາກອນເດັກມີຄຸນນະພາບຕ່ຳ ແລະ ມີຊາວຍີ່ປຸ່ນອີກປະມານ 8,500 ຄົນ ທີ່ຖືກເຮັດໝັນໂດຍໄດ້ຮັບຄວາມຍິນຍອມ, ແຕ່ທະນາຍຄວາມຊີ້ວ່າ ກໍລະນີຂ້າງເທິງມີທ່າອຽງເປັນ "ການບັງຄັບໂດຍພຶດຕິໄນ" ເພາະວ່າຄົນໃນກຸ່ມນີ້ຕ້ອງປະເຊີນກັບຄວາມກົດດັນ.

ຈຳນວນການຜ່າຕັດເຮັດໝັນໃນຍີ່ປຸ່ນ ຫຼຸດລົງຢ່າງຕໍ່ເນື່ອງໃນຊຸມປີ 1980 ແລະ 1990 ກ່ອນທີ່ກົດໝາຍບັງຄັບເຮັດໝັນຈະຖືກຍົກເລີກເມື່ອປີ 1996, ແຕ່ມັນໄດ້ກາຍເປັນຫົວຂໍ້ຮ້ອນໃນປີ 2018 ເມື່ອແມ່ຍິງອາຍຸ 60 ປີຄົນໜຶ່ງ ໄດ້ຟ້ອງຮ້ອງລັດຖະບານ ກ່ຽວກັບຂັ້ນຕອນເຂົ້າຮັບການຜ່າຕັດເຮັດໝັນໃນຕອນທີ່ນາງມີອາຍຸ 15 ປີ, ເຮັດໃຫ້ຫຼາຍຄະດີຄວາມໃນລັກສະນະດຽວກັນ ໄດ້ຖືກຍົກຂຶ້ນມາອີກຄັ້ງ.

ເຖິງວ່າລັດຖະບານຍີ່ປຸ່ນໄດ້ສະແດງຄວາມຂໍໂທດຢ່າງສຸດຊຶ້ງກໍຕາມ, ພາຍຫຼັງການຮັບຮອງເອົາກົດໝາຍໃນປີ 2019 ທີ່ກຳນົດໃຫ້ຈ່າຍເງິນກ້ອນດຽວ ຈຳນວນ 3.2 ລ້ານເຢນ (ປະມານ 465 ລ້ານກີບ) ໃຫ້ແກ່ຜູ້ເຄາະຮ້າຍທັງໝົດ, ແຕ່ຜູ້ເຄາະຮ້າຍທີ່ຍັງມີຊີວິດຢູ່ກ່າວວ່າ: ຈຳນວນເງິນດັ່ງກ່າວມັນບໍ່ພຽງພໍທີ່ຈະຊົດເຊີຍຄວາມທຸກທໍລະມານຂອງພວກເຂົາ ແລະ ຍື່ນຟ້ອງດຳເນີນຄະດີຕໍ່ສານ.

# Sierra Leone ຜ່ານກົດໝາຍ ຫ້າມການແຕ່ງດອງຂອງເດັກ



ຕົ້ນເດືອນກໍລະກົດຜ່ານມາ, ທ່ານ ຈູລຽດ ມາອາດາ ບິໂອ (Julius Maada Bio) ປະທານາທິບໍດີ ແຫ່ງສາທາລະນະລັດເຊຍຣາເລອອນ ໄດ້ລົງນາມໃນຮ່າງກົດໝາຍຫ້າມການແຕ່ງດອງຂອງເດັກ ເຊິ່ງເປັນການເຄື່ອນໄຫວຄັ້ງປະຫວັດສາດແນໃສ່ປົກປ້ອງສິດ ແລະ ສະຫວັດດີການຂອງເດັກຍິງ.

ຮ່າງກົດໝາຍຫ້າມການແຕ່ງດອງຂອງເດັກ ປີ 2024, ປັດຈຸບັນໄດ້ປະກາດໃຊ້ເປັນກົດໝາຍແລ້ວ, ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງເຊຍຣາເລອອນ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ເດັກຍິງ ແລະ ສະໜອງໂອກາດໃຫ້ເຂົາເຈົ້າປະສົບຄວາມສຳເລັດໃນສັງຄົມທີ່ເຂົາເຈົ້າມີຄຸນຄ່າ, ໄດ້ຮັບການປົກປ້ອງ ແລະ ໄດ້ຮັບການປະຕິບັດຢ່າງເທົ່າທຽມກັນ.

ກົດໝາຍດັ່ງກ່າວ ໄດ້ຈັດປະເພດການແຕ່ງດອງທີ່ກ່ຽວຂ້ອງກັບບຸກຄົນທີ່ມີອາຍຸຕ່ຳກວ່າ 18 ປີ ເປັນການກະທຳຜິດທາງອາຍາ, ຜູ້ກະທຳຜິດ ອາດຖືກລົງໂທດຢ່າງໜັກໜ່ວງ ລວມທັງຈຳຄຸກເຖິງ 15 ປີ ແລະ ປັບໃໝເງິນ; ຍິ່ງໄປກວ່ານັ້ນ, ພໍ່ແມ່ ຫຼື ບຸກຄົນທີ່ເຂົ້າຮ່ວມໃນພິທີທີ່ອຳນວຍຄວາມສະດວກໃນການແຕ່ງດອງຂອງເດັກ ອາດຈະຖືກລົງໂທດທາງດ້ານການເງິນຕາມກົດໝາຍອີກດ້ວຍ.

**ແຫຼ່ງຂ່າວ: ຊິນຮວາ**

## ເຫັນໄວ້ ໄດ້ຂີດຂຽນ

❖ ວິເສດ ສະແຫວງສຶກສາ

# ເວັ້ນສຸລາ ລາສິ່ງອະບາຍຍະມຸກ

ທຸກໆປີ ເມື່ອລະດູການເຂົ້າພັນສາໄດ້ວຽນມາຮອດຈອດເຖິງ ຫຼາຍໆຄົນກໍໄດ້ຕັ້ງໃຈອາທິຖານວ່າ ຕະຫຼອດໄລຍະ 3 ເດືອນນີ້ ຕົນເອງຈະຊໍາລະສະສາງສິ່ງທີ່ບໍ່ເປັນມຸງຄຸນໃນຊີວິດ ໂດຍສະເພາະແມ່ນເລື່ອງເສບຕິດ ກໍຄືສິ່ງອະບາຍຍະມຸກຕ່າງໆສ່ວນໃຫຍ່ແມ່ນການອະທິຖານວ່າຈະ "ເລີກເຫຼົ້າເຂົ້າພັນສາ". ເພື່ອໃຫ້ສອດຄ່ອງກັບເປົ້າໝາຍນີ້ ຍັງຂໍສະເໜີເລື່ອງເຫຼົ້າ ໂດຍສະເພາະເພື່ອໃຫ້ເຫັນວ່າຢູ່ບາງປະເທດນັ້ນ ເຂົາມີມາດຕະການຄວບຄຸມນໍ້າເມົານີ້ຄືແນວໃດ.

ຢູ່**ມາເລເຊຍ** ປະເທດທີ່ຄົນສ່ວນໃຫຍ່ນັບຖືສາສະໜາອິດສະລາມນັ້ນ ທາງການໄດ້ມີມາດຕະການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າຢ່າງເປັນລະບົບ ແລະເຄັ່ງຄັດຕະຫຼອດມາ. ຕໍ່ມາໃນວັນທີ 17 ຕຸລາ 2018, ທາງການຂອງປະເທດນີ້ ກໍໄດ້ອອກກໍານົດປັບຂຶ້ນອາຍຸຂອງຜູ້ທີ່ສາມາດຊື້ເຄື່ອງດື່ມທີ່ມີທາດເຫຼົ້າ ຈາກ 18 ປີ ໃນເມື່ອກ່ອນ ມາເປັນ 21 ປີ. ຂໍ້ກໍານົດໃໝ່ນີ້ ມີຜົນສັກສິດແບບຟ້າແມບ ຄືເລີ່ມປະຕິບັດໃນມື້ວັນທີ 17 ຕຸລາ ປີ 2018 ໂລດ. ໄປພ້ອມໆ ກັບການປັບຂຶ້ນເກນອາຍຸດັ່ງກ່າວ, ກໍຍັງມີຂໍ້ບັງຄັບອື່ນຄື: ບັນດາຮ້ານຂາຍເຄື່ອງປະເພດມຶນເມົາ ຕ້ອງຕິດປ້າຍເຕືອນເປີ້ເຈົ້ ດ້ວຍເນື້ອໃນທີ່ວ່າ "ເຄື່ອງດື່ມທີ່ມີທາດເຫຼົ້າກໍ່ໃຫ້ເກີດອັນຕະລາຍຕໍ່ສຸຂະພາບ". ນອກຈາກນັ້ນ ຕິດຢູ່ແກ້ວເຫຼົ້າກໍຍັງຕ້ອງມີຄໍາເຕືອນ ແລະ ບອກເກນອາຍຸຂອງຜູ້ທີ່ສາມາດຊື້ເຫຼົ້າໄດ້. ສໍາລັບຜູ້ລະເມີດນັ້ນຈະຖືກປັບໃໝເປັນເງິນສູງສຸດ 10,000 ຣິງກິດ ຫຼື ປະມານ 2,500 ໂດລາສະຫະລັດ. ຢູ່ປະເທດອີຣານ ມາດຕະການຫຼຸດຜ່ອນການບໍລິໂພກເຫຼົ້າ ໄດ້ເລີ່ມປະຕິບັດມາຢ່າງຈິງຈັງນັບແຕ່ປີ 2013; ໂດຍໄດ້ນໍາໃຊ້ 2 ວິທີເປັນຄູ່ຂະໜານກັນຄື: ນະໂຍບາຍບໍາບັດຜູ້ຕິດເຫຼົ້າ ແລະ ການສຶກສາອົບຮົມໃຫ້ຄົນໃນທົ່ວສັງຄົມຮູ້ກ່ຽວກັບພິດໄພຂອງເຫຼົ້າ ແລ້ວເຊົາດື່ມນໍ້າຕາຜີເຜດນີ້ແບບຖາວອນ.

ໃນປີ 2013 ທາງການອີຣານ ໄດ້ສ້າງສູນບໍາບັດພວກຕິດເຫຼົ້າຂຶ້ນຢູ່ນະຄອນຫຼວງເຕເຮຣານ ຕໍ່ມາໃນປີ 2016 ໄດ້ສ້າງຕື່ມອີກ 6 ສູນ ຍ້ອນຈໍານວນ "ຊຽນເມົາ" ໄດ້ເພີ່ມຂຶ້ນ ທາງການໄດ້ຄາດຄະເນວ່າເພື່ອຮອງຮັບກັບຈໍານວນທີ່ຕົກເປັນເຫຍື່ອຂອງນໍ້າເມົາໃຫ້ພຽງພໍນັ້ນ ຈະຕ້ອງມີສູນບໍາບັດແລະຟັກຟື້ນ ທັງໝົດ 150ແຫ່ງ ໃນທົ່ວປະເທດ. ສະຖິຕິໃນປີ2015 ໃຫ້ຮູ້ວ່າຈໍານວນຄົນອີຣານທີ່ຕິດເຫຼົ້ານັ້ນມີເຖິງ 200,000 ຄົນ. ອີຣານ ມີກົດໝາຍຫ້າມດື່ມເຫຼົ້າທີ່ປະກາດໃຊ້ມາແຕ່ປີ 1979 ແຕ່ປານນັ້ນກໍຍັງເອົາບໍ່ຄ່ອຍຢູ່ ຍັງມີການລັກລອບຜະລິດເຫຼົ້າ, ການຊື້-ຂາຍເຫຼົ້າປອມ ແລະ ການລັກນໍາເຂົ້າເຫຼົ້າຈາກຕ່າງປະເທດໃກ້ຄຽງ ເຊັ່ນ: ຕວກກີ ແລະ ອີຣັກ.

ຢູ່**ປະເທດໄທ**ນັ້ນ ໄດ້ມີຂໍ້ຫ້າມຂາຍເຫຼົ້າໃນມື້ບຸນທາງສາສະໜາ, ຫ້າມຕັ້ງບ່ອນຂາຍເຫຼົ້າໃນວົງລັດສະໝີ 300-500 ແມັດ ຈາກສະຖານທີ່ສຶກສາ. ສະຖິຕິການສໍາຫຼວດທາງສຽງສັງຄົມຊື່ອອກວ່າ 70.7% ເຫັນວ່າຄວນມີກົດໝາຍຫ້າມພະນັກງານຂອງລັດຮັບຜົນປະໂຫຍດໃນທຸກຮູບແບບຈາກບໍລິສັດເບຍ ແລະ ເຫຼົ້າ ຂໍ້ມູນນີ້ອ່າວເກົ່າແດ່ ຄືອອກມາເມື່ອປີ 2017ພຸ້ນ.

TE SOLE

ທະນາຄານພັດທະນາລາວ
LDB Bank

## ຄະນະກໍາມະການລະດັບຊາດປັບປຸງລັດຖະທໍາມະນູນ

*ຂໍເຊີນຊວນບັນດາທ່ານພະນັກງານ, ທະຫານ, ຕໍາຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກໍາມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງປະກອບຄວາມຄິດເຫັນຕໍ່ການປັບປຸງລັດຖະທໍາມະນູນ ສະບັບປີ 2015 ເຊິ່ງຄະນະຮັບຜິດຊອບໄດ້ຈັດຕັ້ງໜ່ວຍງານຮັບຄວາມຄິດເຫັນ, ຂໍສະເໜີຜ່ານອີເມວ:* **laocon@nalao.la**

## ຮຽນພາສາ ຜ່ານສຽງຫົວ



*# ບ່າວກະບື*

"ເອີ່ບື້... ຮູ້ບໍ່...ໄຟກໍາລັງໄໝ້ເຮືອນເຈົ້າໃດຫັ້ນ!"
"ຢ່າເຍີ... ເຮົາຍັງມີໄມ້ກອງໜຶ່ງຢູ່ກ້ອງເຮືອນ, ພຽງພໍສໍາລັບປຸກເຮືອນໃໝ່ໄດ້ອີກເປັນຫຼັງພຸ້ນ !".

*# BAOKBU*

"Say, your house is burning." "That's okay. I got enough lumbe under the house to build a new one".

## ຕາມພາສາ ກາຕູນ




ໃຈແຄບທາງເລີຍແຄບນໍາ

● ໂດຍ : ພູຜາ

## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ຮອງລັດຖະມົນຕີກະຊວງກະສິກໍາແລະປ່າໄມ້, ຮອງລັດຖະມົນຕີກະຊວງຍຸຕິທໍາ, ຮອງຫົວໜ້າຫ້ອງວ່າການສໍານັກງານປະທານປະເທດ ແລະ ຕາງໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈໍາສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນຈໍານວນຫຼາຍ.

ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ມີຄໍາເຫັນກ່າວເປີດ ໂດຍໄດ້ເນັ້ນໜັກວ່າ: ກອງປະຊຸມຄັ້ງນີ້ ຈະໄດ້ພ້ອມກັນຄົ້ນຄວ້າ ແລະ ຮຽບຮຽງກົດໝາຍວ່າດ້ວຍສະຫະກອນ ຕາມການປະກອບຄໍາເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 19 ມິຖຸນາ ຜ່ານມາ, ເຊິ່ງຄະນະຮັບຜິດຊອບຮ່າງກົດໝາຍດັ່ງກ່າວ ໄດ້ຄົ້ນຄວ້າພິຈາລະນາປັບປຸງສໍາເລັດ ໂດຍພື້ນຖານ ແລະ ໃນວັນທີ 28 ມິຖຸນາ 2024 ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ໄດ້ພິຈາລະນາຮັບຮອງເອົາດ້ວຍຄະແນນສຽງເຫັນດີ 90.2 % ແລະ ກອງປະຊຸມຮຽບຮຽງຄັ້ງນີ້ ຈະໄດ້ກວດກາຮຽບຮຽງຄືນໃໝ່ເພື່ອໃຫ້ສາມາດນໍາສະເໜີປະກາດໃຊ້ຕາມລະບຽບການ.

**(ສອນສັກ ວັນວິໄຊ)**

**ຜູ້ຊີ້ນໍາ**
ທ່ານ ສິງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄໍາຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ